ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະ 6 ເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານທົບທວນຄືນເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ	4 - 5
ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ	6
ໃບລາຍງານຖານະການເງິນ	7
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	8
ໃບລາຍງານກະແສເງິນສົດ	9
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	10 – 35

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ. 1169/ຈທວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ. 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ. 0833/ກຄກ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການ ໃນຕະຫຼາດຫລັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຄະນະອຳນວຍການ

ສະມາຊິກຂອງຄະນະອຳນວຍການພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ ເວີຍ ຫວາ	ປະທານ
ທ່ານ ນາງ ອໍລະໄທ ສັນຕິຄົງຄາ	ຮອງປະທານ
ທ່ານ ຫຼີ ກວາງຊ້ານ	ສະມາຊິກ
ທ່ານ ບຸລະພາ ສັນຕິຄົງຄາ	ສະມາຊິກ
ທ່ານ ສາຍ ຈ້ຽນຫົງ	ສະມາຊິກ
ທ່ານ ຫຼີ ສ່ຽວຕົງ	ສະມາຊິກ
ທ່ານ ອຸ່ ຊິງຫວາ	ສະມາຊິກ
ທ່ານ ສ່ຽວ ໂຢງ	ສະມາຊິກ
ທ່ານ ນາງ ເຕີ້ງ ຢຸ່	ສະມາຊິກ
ທ່ານ ຫູ ຈ້ຽນ	ສະມາຊິກ
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ ຫຼີ ສ່ຽວຕົງ	ຜູ້ອຳນວຍການໃຫຍ່
ທ່ານ ຊິນເຟີ່ຍ ຫຸ້	ຜູ້ອຳນວຍການ
ທ່ານ ມ້ຽວ ເຈີ້ນຫວຸ້	ຜູ້ອຳນວຍການ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ ສ່ຽວ ໂຍງ	ຫົວໜ້າ
ທ່ານ ນາງ ເຕີ້ງ ຢຸ່	ສະມາຊິກ
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ

ຕົວແທນທາງດ້ານກົດໝາຍ

ຕົວແທນທາງກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະມື້ອອກປົດລາຍງານສະບັບນີ້ແມ່ນ ທ່ານ ຫຼີ ສ່ຽວຕົ໋ງ, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ໋ງ ລາວ ຈຳກັດ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ມີຄວາມຍິນດີສະເໜີບົດລາຍງານ ແລະ ເອກະສານລາຍງານທາງການເງິນ ຂອງບໍລິສັດສຳລັບໄລຍະສິ້ນສຸດຫົກເດືອນ 30 ມິຖຸນາ 2019.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນສຳລັບໄລຍະເວລາຫົກເດືອນຕົ້ນປີຂອງແຕ່ລະໄລຍະໃຫ້ມີຄວາມຖືກຕ້ອງ ແລະ ຍຸດຕິທຳ ສຳລັບໃບລາຍງານຖານະການເງິນໄລຍະເວລາຫົກເດືອນຕົ້ນປີຂອງບໍລິສັດ ແລະ ຜົນໄດ້ຮັບ ແລະ ກະແສເງິນສົດ ໄລຍະເວລາຫົກເດືອນຕົ້ນປີ. ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັບດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່ານັບດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ້ງ ຫຼື ການປະຕິບັດທີ່ບໍ່ສອດຄ່ອງທີ່ສຳຄັນ ຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ; ແລະ ອະທິບາຍໃນເອກະສານລາຍງານການເງິນ ສຳລັບໄລຍະ 6 ເດືອນ ຕົ້ນ ປີ;
- ກະກຽມເອກະສານລາຍງານການເງິນ ສຳລັບໄລຍະ 6 ເດືອນ ຕົ້ນປີ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນ ໃນກໍລະນີທີ່ບໍລິສັດຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງ ເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງ ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາ ການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນ ສຳລັບໄລຍະ 6 ເດືອນຕົ້ນປີ ທີ່ ສິ້ນສຸດວັນທີ 30 ມິຖຸນາ 2019.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2019 ແມ່ນ ໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເລກທີ 3.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫງ ສຸງວ໌ ຕ໋ຽ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

15 ສິງຫາ 2019

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61403331/21303328

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ

ເຖິງ: ຄະນະຜູ້ອຳນວຍການຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ການແນະນຳ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ"), ນະວັນທີ 30 ມິຖຸນາ 2019 ແລະ ປະກອບດ້ວຍໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບໄລຍະ 6 ເດືອນຕົ້ນປີ, ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ຕາມທີ່ໄດ້ລະບຸໄວ້ໃນໜ້າທີ 6 ຫາ 35. ຄະນະຜູ້ບໍລິຫານມີໜ້າທີ່ຮັບຜິດຊອບສຳລັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນໄລຍະ 6 ເດືອນຕົ້ນປີຕາມນະໂຍບາຍການບັນຊີທີ່ໄດ້ກ່າວໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 3 ຂອງເອກະສານລາຍງານການເງິນ. ໜ້າທີ່ຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນການອອກບົດລາຍງານຕໍ່ເອກະສານລາຍງານການເງິນໂດຍອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດຂອງການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍອີງຕາມມາດຕະຖານສາກົນວ່າດ້ວຍ ການທົບທວນຄືນເລກທີ 2410, "ການປະຕິບັດການທົບທວນຄືນຂໍ້ມູນທາງການເງິນສຳລັບໄລຍະ 6 ເດືອນຕົ້ນປີ ແມ່ນດຳເນີນໂດຍນັກກວດສອບອິດສະຫຼະ", ການທົບທວນຄືນສັງລວມເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີນັ້ນ ປະກອບດ້ວຍການສອບຖາມ ແລະ ໄດ້ຖາມບຸກຄົນທີ່ຮັບຜິດຊອບວຽກງານການເງິນ ແລະ ການບັນຊີ ແລະ ນຳໃຊ້ຂັ້ນຕອນການວິເຄາະຕ່າງໆ. ການທົບທວນຄືນນັ້ນມີຂັ້ນຕອນໜ້ອຍກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ພວກຂ້າພະເຈົ້າບໍ່ສາມາດເຊື່ອໝັ້ນວ່າຈະພົບເຫັນໄດ້ເຖິງບັນຫາທີ່ສຳຄັນທັງໝົດຄືກັບການດຳເນີນການກວດສອບ. ສະນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດສະແດງຄຳເຫັນໄດ້.

ການສະຫຼຸບ

ອີງຕາມການທົບທວນຄືນ, ພວກຂ້າພະເຈົ້າພົບວ່າບໍ່ມີສິ່ງໃດທີ່ຈະເປັນສິ່ງບົ່ງຊີ້ວ່າ ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ ສະບັບນີ້ ບໍ່ໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ສະເໜີໃນບົດອະທິບາຍຊ້ອນທ້າຍ ເລກທີ 3 ຂອງເອກະສານລາຍງານການເງິນ 6 ເດືອນຕົ້ນປີ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າ, ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ກ່ຽວກັບບົດອະທິບາຍຊ້ອນທ້າຍ ເລກທີ 3 ຂອງເອກະ ສານລາຍງານການເງິນ, ເຊິ່ງໄດ້ອະທິບາຍກ່ຽວກັບນະໂຍບາຍບັນຊີທີ່ນຳໃຊ້ໂດຍບໍລິສັດ. ນະໂຍບາຍບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົ່ງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດ ໂດຍອີງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຕາມທີ່ໄດ້ນຳສະເໜີໃນບົດອະທິບາຍຊ້ອນທ້າຍ ເລກທີ 3.3, ອາກອນມູນຄ່າເພີ່ມຈາກລາຍຮັບຄ່າເຊົ່າ ແລະ ລາຍຮັບອື່ນໆແມ່ນຈະຖືກຮັບຮູ້ພຽງແຕ່ການແຈ້ງເສຍອາກອນ ແລະ ຈ່າຍສຳລັບລູກຄ້າຜູ້ທີ່ໄດ້ຮັບໃບເກັບເງິນອາກອນມູນຄ່າເພີ່ມຈາກບໍລິສັດ.

Building a better working world

ຕາມທີ່ໄດ້ນຳສະເໜີໃນບົດອະທິບາຍຊ້ອນທ້າຍ ເລກທີ 3.15 ບໍລິສັດຮັບຮູ້ລາຍຮັບຈາກສັນຍາ ການຮ່ວມມືທາງທຸລະກິດ ແລະ ພາລະຜູກພັນ ອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງ ຕາມລາຍຮັບທັງໝົດຂອງສັນຍາ ເຖິງຢ່າງໃດກໍຕາມອາກອນມູນຄ່າເພີ່ມແມ່ນໄດ້ຖືກແຈ້ງເສຍ ແລະ ຈ່າຍ ຕາມຈຳນວນສຸດທິທີ່ໄດ້ຮັບໂດຍບໍລິສັດເທົ່ານັ້ນ ແລະ ສຳລັບໃບເກັບເງິນແມ່ນອອກໂດຍບໍລິສັດ.

ຕາມການເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍ ເລກທີ 2 ຂອງເອກະສານລາຍງານການເງິນ, ເອກະສານລາຍງານການເງິນແມ່ນໄດ້ຖືກ ກະກຽມເພື່ອນຳໃຊ້ໃນການລາຍງານຕາມຄຽງຮ້ອງຕ້ອງການຂອງຜູ້ເປັນເຈົ້າຂອງ. ດັ່ງນັ້ນເອກະສານລາຍງານການເງິນອາດຈະບໍ່ເໝາະສົມກັບ ວັດຖຸປະສົງອື່ນໆ. ການລາຍງານຂອງພວກຂ້າພະເຈົ້າມີວັດຖຸປະສົງເພື່ອເປັນຂໍ້ມູນ ແລະ ນຳໃຊ້ຂອງຜູ້ບໍລິຫານ ແລະ ຜູ້ເຈົ້າຂອງເທົ່ານັ້ນ, ແລະ ບໍ່ຄວນເຜີຍແຜ່ ຫຼື ນຳໃຊ້ໂດຍບຸກຄົນອື່ນ .

ການສະຫຼຸບຂອງພວກຂ້າພະເຈົ້າບໍ່ໄດ້ມີການແກ້ໄຂບັນຫາເຫຼົ່ານີ້.

ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ ERNST & YOUNG LAO CO.,LTD

Ernst & Young Lao Ltd

ນະຄອນຫຼວງວຽງຈັນ, ສປປ ລາວ

15 ສິງຫາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບໄລຍະ 6 ເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2019

	ບົດອະທິບາຍ ເລກທີ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ລາຍຮັບ	4	14,132,353,619	13,902,534,461
ລາຍຮັບອື່ນໆຈາກການດຳເນີນງານ		1,119,781,866	1,496,096,502
ລາຍຮັບລວມ		**15,252,135,485**	**15,398,630,963**
ລາຍຈ່າຍຈາກການດຳເນີນງານ	5	(10,054,703,429)	(9,441,390,526)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ	9	2,784,600,000	2,518,500,000
ກຳໄລຈາກການດຳເນີນງານ		**7,982,032,056**	**8,475,740,437**
ລາຍຮັບທາງການເງິນ		55,642,010	6,437,970
ລາຍຈ່າຍທາງການເງິນ	13	(1,124,661,622)	(1,067,658,368)
ກຳໄລກ່ອນອາກອນ		**6,913,012,444**	**7,414,520,039**
ລາຍຈ່າຍອາກອນກຳໄລ	6	(1,313,472,364)	(1,779,484,809)
ກຳໄລພາຍໃນໄລຍະ		**5,599,540,080**	**5,635,035,230**
ລາຍຮັບອື່ນໆນອກການທຸລະກິດພາຍໃນໄລຍະ, ອາກອນສຸດທິ		-	-
ລວມລາຍຮັບນອກການທຸລະກິດພາຍໃນໄລຍະ, ອາກອນສຸດທິ		**5,599,540,080**	**5,635,035,230**
ລາຍຮັບຕໍ່ຮຸ້ນ			
- ພື້ນຖານ, ກຳໄລພາຍໃນໄລຍະຂອງຜູ້ຖືຮຸ້ນ ສາມັນ		*53.30*	*58.70*

ກະກຽມໂດຍ:

ທ່ານ ຊິນເຟີ ຫຸ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫຼີ ສົງວຕີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
15 ສິງຫາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນສຳລັບ 6 ເດືອນຕົ້ນປີ
ນະວັນທີ 30 ມິຖຸນາ 2019

	ບົດອະທິບາຍ ເລກທີ	*30 ມິຖຸນາ 2019 ກີບ*	*31 ທັນວາ 2018 ກີບ*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	7	39,165,858,257	4,144,271,082
ໜີ້ຕ້ອງຮັບການຄ້າ ແລະ ລູກໜີ້ອື່ນໆ	8	9,766,240,235	8,796,019,145
ຈ່າຍລ່ວງໜ້າສຳລັບຊື້ຊັບສິນຄົງທີ່	9	23,400,000,000	-
ລວມຍອດຊັບສິນໝຸນວຽນ		**72,332,098,492**	**12,940,290,227**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ	10	167,459,400,000	164,674,800,000
ລວມຍອດຊັບສິນບໍ່ໝຸນວຽນ		**167,459,400,000**	**164,674,800,000**
ລວມຍອດຊັບສິນ		**239,791,498,492**	**177,615,090,227**
ທຶນ ແລະ ໜີ້ສິນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ເຈົ້າໜີ້ອື່ນໆ	12	5,732,855,566	2,827,996,983
ສ່ວນປະຈຸບັນຂອງເງິນກູ້ຢືມໄລຍະຍາວ	11	64,232,500,000	-
ລວມຍອດໜີ້ສິນໝຸນວຽນ		**69,965,355,566**	**2,827,996,983**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	11	-	64,232,500,000
ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະ	6	4,436,347,991	3,152,429,037
ລວມຍອດໜີ້ສິນບໍ່ໝຸນວຽນ		**4,436,347,991**	**67,384,929,037**
ລວມຍອດໜີ້ສິນ		**74,401,703,557**	**70,212,926,020**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	13	147,199,900,000	96,000,000,000
ສ່ວນເກີນມູນຄ່າຮຸ້ນ		2,559,995,000	-
ຄັງແຮຕາມລະບຽບການ		1,562,989,994	1,140,216,421
ຄັງແຮເພື່ອຂະຫຍາຍທຸລະກິດ		1,562,989,994	1,140,216,421
ກຳໄລສະສົມ		12,503,919,947	9,121,731,365
ລວມຍອດທຶນ		**165,389,794,935**	**107,402,164,207**
ລວມຍອດໜີ້ສິນ ແລະ ທຶນ		**239,791,498,492**	**177,615,090,227**

ກະກຽມໂດຍ:

ທ່ານ ຊິນເພັຍ ຫຸ້ ຫ
ຜູ້ຈັດການຝ່າຍການເງິນ
ນະຄອນຫຼວງວຽງຈັນ, ສປປ ລາວ
15 ສິງຫາ 2019

ອະນຸມັດໂດຍ:

ທ່ານ ຊ ສ ສ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະຫົກເດືອນສິ້ນສຸດນະ ວັນທີ 30 ມິຖຸນາ 2019

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ສ່ວນເກີນມູນຄ່າຮຸ້ນ ກີບ*	*ຄັງແຮຕາມລະບຽບການ ກີບ*	*ຄັງແຮເພື່ອຂະຫຍາຍທຸລະກິດ ກີບ*	*ກຳໄລສະສົມ ກີບ*	*ລວມທັງໝົດ ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2018	**96,000,000,000**	**-**	**53,102,842**	**53,102,842**	**424,822,737**	**96,531,028,421**
ກຳໄລສຸດທິພາຍໃນໄລຍະ	-	-	-	-	5,635,035,230	5,635,035,230
ຈັດສັນກຳໄລເຂົ້າຄັງແຮ	-	-	563,503,523	563,503,523	(1,127,007,046)	-
ຍອດເຫຼືອໃນວັນທີ 30 ມິຖຸນາ 2018	**96,000,000,000**	**-**	**616,606,365**	**616,606,365**	**4,932,850,921**	**102,166,063,651**
ຍອດເຫຼືອນະວັນທີ 1 ມັງກອນ 2019	**96,000,000,000**	**-**	**1,140,216,421**	**1,140,216,421**	**9,121,731,365**	**107,402,164,207**
ຮຸ້ນອອກຈຳໜ່າຍ	51,199,900,000	2,559,995,000	-	-	-	53,759,895,000
ການດັດແກ້ອາກອນໃນປີທີ່ຜ່ານມາ	-	-	(137,180,435)	(137,180,435)	(1,097,443,482)	(1,371,804,352)
ກຳໄລສຸດທິພາຍໃນໄລຍະ	-	-	-	-	5,599,540,080	5,599,540,080
ຈັດສັນກຳໄລເຂົ້າຄັງແຮ	-	-	559,954,008	559,954,008	(1,119,908,016)	-
ຍອດເຫຼືອໃນວັນທີ 30 ມິຖຸນາ 2019	**147,199,900,000**	**2,559,995,000**	**1,562,989,994**	**1,562,989,994**	**12,503,919,947**	**165,389,794,935**

ກະກຽມໂດຍ:

ທ່ານ ຊິນເຟີ ຫຸ້
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສົງເຕົ້ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
12 ສິງຫາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດສຳລັບໄລຍະ 6 ເດືອນຕົ້ນປີ
ສຳລັບໄລຍະ 6 ເດືອນສິ້ນສຸດນະ ວັນທີ 30 ມິຖຸນາ 2019

	ບົດອະທິບາຍ ເລກທີ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ*	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**6,913,012,445**	**7,414,520,039**
ການດັດແກ້ສຳລັບ:			
ກຳໄລຈາກການຕີມູນຄ່າໃນຊັບສິນເພື່ອການ ລົງທຶນ	10	(2,784,600,000)	(2,518,500,000)
ລາຍຈ່າຍດອກເບ້ຍ		1,124,069,112	1,317,658,368
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນ ໝຸນວຽນ		**5,252,481,556**	**5,963,678,407**
ການເພີ່ມຂຶ້ນຂອງໜີ້ຕ້ອງຮັບ		(25,494,290,202)	(5,408,534,223)
ການເພີ່ມຂຶ້ນຂອງໜີ້ຕ້ອງສົ່ງ		1,583,580,821	1,319,921,310
ອາກອນກຳໄລທີ່ຈ່າຍແລ້ວ	6	(80,080,000)	(40,000,000)
ກະແສເງິນສົດສຸດທິ(ນຳໃຊ້)/ ຈາກກິດຈະກຳການດຳ ເນີນງານ		**(18,738,307,825)**	**1,835,065,494**
ກິດຈະກຳການລົງທຶນ			
ກະແສເງິນສົດສຸດທິ ຈາກກິດຈະກຳການລົງທຶນ		-	-
ກິດຈະກຳທາງການເງິນ			
ລາຍຮັບຈາກການອອກ			
- ມູນຄ່າໜ້າໃບ		51,199,900,000	-
ສ່ວນເກີນມູນຄ່າຮຸ້ນ		2,559,995,000	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**53,759,895,000**	-
ເງິນສົດເພີ່ມຂຶ້ນສຸດທິພາຍໃນໄລຍະ		**35,021,587,175**	**1,835,065,494**
ເງິນສົດໃນຕົ້ນ		**4,144,271,082**	**10,226,197**
ເງິນສົດໃນທ້າຍປີ		**39,165,858,257**	**1,845,291,691**

ກະກຽມໂດຍ:

ທ່ານ ຊິນເພັຍ ຫຸ້ ຫ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ທ້າວ ສ້ວ ຕິ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

15 ສິງຫາ 201

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ນະວັນທີ 30 ມິຖຸນາ 2019 ແລະ ສຳລັບໄລຍະ 6 ເດືອນທີ່ສິ້ນສຸດ

1. ຂໍ້ມູນກ່ຽວກັບບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ. 1169/ຈທວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ. 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ. 0833/ກຄກ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫລັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

2. ພື້ນຖານການກະກຽມ

2.1 ພື້ນຖານການກະກຽມ

ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ ຂອງບໍລິສັດແມ່ນຖືກສ້າງຂຶ້ນໂດຍນຳໃຊ້ມູນຄ່າຕົ້ນທຶນເດີມ ຍົກເວັ້ນ ຊັບສິນເພື່ອການລົງທຶນ ທີ່ໄດ້ຖືກວັດແທກດ້ວຍມູນຄ່າຍຸດຕິທຳ. ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ ນີ້ແມ່ນໄດ້ສະແດງເປັນ ສະກຸນເງິນກີບ ("ກີບ") ເນື່ອງຈາກເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳສ່ວນໃຫຍ່ຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີຂອງບໍລິສັດ ໄດ້ມີການກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີ ທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍ ເລກທີ 3 ຂອງເອກະສານລາຍງານທາງການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີແມ່ນ ໄດ້ຖືກກະກຽມເພື່ອນຳໃຊ້ໃນການລາຍງານຕາມຄຳຮ້ອງຕ້ອງການຂອງຜູ້ເປັນເຈົ້າຂອງ. ດັ່ງນັ້ນ, ເອກະສານລາຍງານທາງການເງິນດັ່ງກ່າວອາດຈະບໍ່ມີຄວາມເໝາະສົມຕໍ່ກັບຈຸດປະສົງອື່ນໆ.

ປີການບັນຊີ

ປີການບັນຊີຂອງບໍລິສັດເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

2. ພື້ນຖານການກະກຽມ (ຕໍ່)

2.2 ການພິຈາລະນາ, ປະເມີນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ

ການກະກຽມເອກະສານລາຍງານການເງິນຂອງບໍລິສັດ ຄະນະບໍລິຫານຕ້ອງພິຈາລະນາ, ປະເມີນ ແລະ ຕັ້ງສົມມຸດຖານ ທີ່ມີຜົນກະທົບຕໍ່ການລາຍງານທາງດ້ານລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍຂໍ້ມູນ, ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ການປະເມີນ ແລະ ຕັ້ງສົມມຸດຖານແມ່ນມີການປະເມີນຢ່າງຕໍ່ເນື່ອງໂດຍອີງໃສ່ປະສົບການຂອງຜູ້ບໍລິຫານ ແລະ ປັດໃຈອື່ນໆ ລວມທັງການຄາດຄະເນເຫດການໃນອະນາຄົດທີ່ມີເຫດຜົນພາຍໃຕ້ສະຖານະການ. ຄວາມບໍ່ແນ່ນອນຂອງການຕັ້ງສົມມຸດຖານ ແລະ ການຄາດຄະເນເຫຼົ່ານີ້ ອາດສົ່ງຜົນໃຫ້ມີການດັດແກ້ມູນຄ່າຊັບສິນ ຫຼື ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ການພິຈາລະນາ

ໃນຂະບວນການປະຕິບັດນະໂຍບາຍການບັນຊີຂອງບໍລິສັດ, ຜູ້ບໍລິຫານໄດ້ທຳການພິຈາລະນາດັ່ງຕໍ່ໄປນີ້ ເຊິ່ງສົ່ງຜົນກະທົບທີ່ສຳຄັນຕໍ່ມູນຄ່າທີ່ໄດ້ຮັບຮູ້ໃນເອກະສານລາຍງານການເງິນໄລຍະ 6 ເດືອນຕົ້ນປີດັ່ງຕໍ່ໄປນີ້:

ການຈັດປະເພດຂອງຊັບສິນ

ບໍລິສັດໄດ້ກຳນົດວ່າ ຊັບສິນຖືກຈັດເປັນຊັບສິນເພື່ອການລົງທຶນ ຫຼື ຊັບສິນທີ່ເປັນເຄື່ອງໃນສາງ:

- ຊັບສິນເພື່ອການລົງທຶນປະກອບດ້ວຍ ທີ່ດິນ ແລະ ຕຶກອາຄານ (ສ່ວນໃຫຍ່ເປັນຫ້ອງການ ແລະ ພື້ນທີ່ສຳລັບການຄ້າຍ່ອຍ) ຊັບສິນດັ່ງກ່າວບໍ່ໄດ້ມີໄວ້ສຳລັບນຳໃຊ້ໃນການດຳເນີນງານຂອງບໍລິສັດ, ຫຼື ຂາຍ, ແຕ່ມີໄວ້ສຳລັບໃຫ້ເຊົ່າເພື່ອສ້າງລາຍຮັບ ແລະ ເພີ່ມທຶນ. ອາຄານເຫຼົ່ານີ້ມີໄວ້ໃຫ້ເຊົ່າ ແລະ ບໍ່ມີວັດຖຸປະສົງໄວ້ເພື່ອຂາຍ ໃນການດຳເນີນທຸລະກິດຕາມປົກກະຕິ.

- ຊັບສິນທີ່ເປັນເຄື່ອງໃນໃນສາງປະກອບດ້ວຍ ຊັບສິນທີ່ມີໄວ້ເພື່ອຂາຍໃນການດຳເນີນທຸລະກິດປົກກະຕິ. ໂດຍສ່ວນໃຫຍ່ກຸ່ມບໍລິສັດຈະພັດທະນາ ແລະ ຂາຍໂຄງການດັ່ງກ່າວກ່ອນ ຫຼື ໂຄງການສ້າງແລ້ວ.

ນະວັນທີ 30 ມິຖຸນາ 2019, ບໍລິສັດໄດ້ມີການນຳສະເໜີຊັບສິນເພື່ອການລົງທຶນ ໃນບົດອາທິບາຍຊ້ອນທ້າຍ ເລກທີ 10.

ສັນຍາເຊົ່າຊັບສິນໃນການດຳເນີນງານ-ໃນຖານະບໍລິສັດຜູ້ໃຫ້ເຊົ່າ

ບໍລິສັດໄດ້ເຮັດສັນຍາເຊົ່າຊັບສິນທາງການຄ້າ ດ້ານຊັບສິນເພື່ອການລົງທຶນ. ໂດຍບໍລິສັດກຳນົດຕາມການປະເມີນຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງ ໂດຍພິຈາລະນາຈາກຄວາມສ່ຽງທີ່ສຳຄັນ ແລະ ຜົນຕອບແທນຂອງຜູ້ເປັນເຈົ້າຂອງຊັບສິນ ແລະ ບັນຊີເຫຼົ່ານີ້ມີໄວ້ສຳລັບສັນຍາການເຊົ່າສິນເຊື່ອເພື່ອໃນດຳເນີນກິດຈະການ.

ການປະເມີນ ແລະ ການຕັ້ງຂໍ້ສົມມຸດຖານ

ຂໍ້ສົມມຸດຖານຫຼັກທີ່ກ່ຽວຂ້ອງກັບອະນາຄົດ ແລະ ແຫລ່ງຂໍ້ມູນຫຼັກທີ່ສຳຄັນອື່ນໆ ຂອງການຄາດຄະເນຄວາມບໍ່ແນ່ນອນນະມື້ອອກບົດລາຍງານ ເຊິ່ງເປັນຄວາມສ່ຽງທີ່ສຳຄັນຂອງການດັດແກ້ມູນຄ່າຊັບສິນ ແລະ ຫນີ້ສິນພາຍໃນເອກະສານລາຍງານການເງິນປີຕໍ່ໄປ, ເຊິ່ງຖືກອະທິບາຍໄວ້ດ້ານລຸ່ມຕໍ່ໄປນີ້.

ບໍລິສັດໄດ້ອີງຕາມຂໍ້ສົມມຸດຖານ ແລະ ການຄາດຄະເນຕາມພາຣາມິເຕີໃນການກະກຽມເອກະສານລາຍງານການເງິນໄລຍະ 6 ເດືອນຕົ້ນປີ. ສະຖານະການ ແລະ ການຕັ້ງຂໍ້ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດ, ເຖິງຢ່າງໃດກໍ່ຕາມ ອາດມີການປ່ຽນແປງຕາມການປ່ຽນແປງຂອງຕະຫຼາດ ຫຼື ສະຖານະການທີ່ຢູ່ນອກເໜືອການຄອບຄຸມຂອງບໍລິສັດ. ການປ່ຽນແປງດັ່ງກ່າວສະທ້ອນໃຫ້ເຫັນເຖິງຂໍ້ສົມມຸດຖານທີ່ເກີດຂຶ້ນ.

2. ພື້ນຖານການກະກຽມ (ຕໍ່)

2.2 ການພິຈາລະນາ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ (ຕໍ່)

ການປະເມີນມູນຄ່າຊັບສິນເພື່ອການລົງທຶນ

ມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນໄດ້ຖືກກຳນົດໂດຍຜູ້ຊ່ຽວຊານດ້ານປະເມີນມູນຄ່າອະສັງຫາລິມະຊັບ ໂດຍໃຊ້ເຕັກນິກ ແລະ ຫລັກການປະເມີນມູນຄ່າທີ່ໄດ້ຮັບການຍອມຮັບ ເຊິ່ງເປີດເຜີຍໃນບົດອະທິບາຍຊ້ອນທ້າຍ ເລກທີ 10.

ອາກອນ

ມີຄວາມບໍ່ແນ່ນອນໃນການຕີຄວາມໝາຍຕາມກົດລະບຽບທາງດ້ານອາກອນທີ່ມີຄວາມຊັບຊ້ອນ, ການປ່ຽນແປງດ້ານກົດໝາຍອາກອນ, ຈຳນວນ ແລະ ເວລາລາຍງານອາກອນລາຍໄດ້ໃນອະນາຄົດ. ເນື່ອງຈາກຂໍ້ຕົກລົງຕາມສັນຍາມີລັກສະນະໃນໄລຍະຍາວ ແລະ ມີຄວາມຊັບຊ້ອນ, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນທີ່ເກີດຂຶ້ນຈິງ ແລະ ຂໍ້ສົມມຸດຖານ, ຫຼື ການປ່ຽນແປງໃນອະນາຄົດຕາມຂໍ້ສົມມຸດຖານດັ່ງກ່າວ, ອາດເຮັດໃຫ້ຈຳເປັນຕ້ອງໄດ້ມີການດັດແກ້ອາກອນລາຍໄດ້ ແລະ ລາຍຈ່າຍທີ່ໄດ້ບັນທຶກ. ບໍລິສັດໄດ້ສ້າງເງິນແຮບົນພື້ນຖານການຄາດຄະເນຢ່າງສົມເຫດສົມຜົນ ສຳລັບຜົນກະທົບດ້ານອາກອນທີ່ອາດຈະເກີດຂຶ້ນຈາກການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ສປປ ລາວ. ການກະກຽມເງິນແຮແມ່ນຂຶ້ນກັບຫຼາຍປັດໄຈເຊັ່ນ: ປະສົບຈາກການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນທີ່ຜ່ານມາ, ຄວາມແຕກຕ່າງໃນການຕີຄວາມໝາຍຕາມກົດລະບຽບດ້ານອາກອນ ແລະ ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ສ່ວຍສາອາກອນເຊັ່ນ ຄວາມແຕກຕ່າງຈາກການຕີຄວາມໝາຍ ທີ່ເກີດຂຶ້ນອາດຈະຂຶ້ນກັບເງື່ອນໄຂໃນ ສປປ ລາວ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

3.1 *ການຈັດປະເພດຂອງຊັບສິນໝຸນວຽນ- ຊັບສິນບໍ່ໝຸນວຽນ*

ບໍລິສັດໄດ້ນຳສະເໜີຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນ ໂດຍອີງໃສ່ການຈັດປະເພດຊັບສິນໝຸນວຽນ/ບໍ່ໝຸນວຽນ. ຊັບສິນຈະເປັນຊັບສິນໝຸນວຽນກໍຕໍ່ເມື່ອ:

- ຄາດຫວັງວ່າຈະໄດ້ຮັບຮູ້ ຫຼື ມີຈຸດປະສົງທີ່ຈະຂາຍ ຫຼື ນຳໃຊ້ໃນຮອບວຽນປະຕິບັດການປົກກະຕິ
- ຈັດຂຶ້ນເພື່ອວັດປະສົງຂອງທາງການຄ້າ
- ຄາດວ່າຈະສາມາດບັນລຸໄດ້ພາຍໃນສິບສອງເດືອນຫຼັງຈາກໄລຍະການລາຍງານ, ຫຼື
- ເງິນສົດ ຫຼື ລາຍການທຽບເທົ່າເງິນສົດ ເວັ້ນເສຍແຕ່ຈະຖືກຈຳກັດຈາກການແລກປ່ຽນ ຫຼື ນຳໃຊ້ເພື່ອຊຳລະໜີ້ສິນຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະການລາຍງານ

ບໍລິສັດໄດ້ຈັດປະເພດຊັບສິນອື່ນໆທັງໝົດທີ່ແມ່ນຊັບສິນບໍ່ໝຸນວຽນ

ໜີ້ສິນຈະເປັນໜີ້ສິນໝຸນວຽນກໍຕໍ່ເມື່ອ

- ຄາດວ່າຈະໄດ້ຮັບການຊຳລະຕາມຮອບວຽນການດຳເນີນງານປົກກະຕິ
- ຈັດຂຶ້ນເພື່ອວັດປະສົງຂອງທາງການຄ້າ
- ມີກຳນົດການຊຳລະພາຍໃນສິບສອງເດືອນ ຫຼັງຈາກໄລຍະເວລາຂອງການລາຍງານ, ຫຼື
- ບໍ່ມີເງື່ອນໄຂໃດໆໃນການເຍື້ອນຊຳລະໜີ້ຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະເວລາການລາຍງານ

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.1 ການຈັດປະເພດຂອງຊັບສິນໝຸນວຽນ- ຊັບສິນບໍ່ໝຸນວຽນ (ຕໍ່)

ບໍລິສັດໄດ້ແບ່ງປະເພດເປັນໜີ້ສິນອື່ນໆເປັນຫນີ້ສິນທີ່ບໍ່ໝຸນວຽນ

ຊັບສິນ ແລະ ໜີ້ສິນທີ່ຕ້ອງເສຍອາກອນແມ່ນຖືກຈັດປະເພດເປັນຊັບສິນ ແລະ ໜີ້ສິນບໍ່ໝຸນວຽນ

3.2 ການວັດແທກມູນຄ່າຍຸດຕິທຳ

ບໍລິສັດວັດແທກມູນຄ່າຂອງຊັບສິນເພື່ອການລົງທຶນຕາມມູນຄ່າຍຸດຕິທຳນະວັນທີການລາຍງານ. ບໍລິສັດບໍ່ມີເຄື່ອງມືທາງການເງິນໃນການວັດແທກມູນຄ່າຍຸດຕິທຳ. ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບມູນຄ່າຍຸດຕິທຳສຳລັບລາຍການທີ່ຖືກວັດແທກຢູ່ໃນມູນຄ່າຍຸດຕິທຳ ຫຼື ມູນຄ່າຍຸດຕິທຳໄດ້ຖືກເປີດເຜີຍ, ໄດ້ຖືກສະຫຼຸບໃນບົດອະທິບາຍດັ່ງຕໍ່ໄປນີ້:

- ການເປີດເຜີຍຂໍ້ມູນກ່ຽວກັບນະໂຍບາຍການບັນຊີ *ບົດອະທິບາຍເລກທີ 3*
- ວິທີການປະເມີນມູນຄ່າ, ການຄາດຄະແນ ແລະ ສົມມຸດຖານທີ່ສຳຄັນ *ບົດອະທິບາຍເລກທີ 9*
- ຊັບສິນເພື່ອການລົງທຶນ *ບົດອະທິບາຍເລກທີ 9*

ມູນຄ່າຍຸດຕິທຳໝາຍເຖິງລາຄາທີ່ຈະໄດ້ຮັບຈາກການຂາຍຊັບສິນ ຫຼື ຊຳລະເພື່ອໂອນຫນີ້ສິນໃນທຸລະກຳທີ່ເປັນລະບຽບລະຫວ່າງຜູ້ເຂົ້າຮ່ວມຕະຫຼາດນະມື້ວັດແທກ. ການວັດແທກມູນຄ່າຍຸດຕິທຳແມ່ນອີງໃສ່ການສົມມຸດຕິຖານວ່າທຸລະກຳໃນການຂາຍຊັບສິນ ຫຼື ໂອນຫນີ້ສິນຈະເກີດຂຶ້ນ:

- ໃນຕະຫຼາດຫຼັກສຳລັບຊັບສິນ ຫຼື ຫນີ້ສິນ, ຫຼື
- ໃນກໍລະນີບໍ່ມີຕະຫຼາດຫຼັກ, ໃນຕະຫຼາດທີ່ມີປະໂຫຍດຫຼາຍທີ່ສຸດສຳລັບຊັບສິນ ຫຼື ຫນີ້ສິນ

ບໍລິສັດຕ້ອງເຂົ້າເຖິງຕະຫຼາດຫຼັກ ຫຼື ຕະຫຼາດທີ່ມີປະໂຫຍດຫຼາຍທີ່ສຸດ.

ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ຫນີ້ສິນ ຖືກວັດແທກໂດຍການໃຊ້ສົມມຸດຖານວ່າ ຜູ້ເຂົ້າຮ່ວມໃນຕະຫຼາດຈະໃຊ້ໃນການກຳນົດລາຄາຊັບສິນ ຫຼື ຫນີ້ສິນ ໂດຍຕັ້ງສົມມຸດຖານວ່າຜູ້ເຂົ້າຮ່ວມໃນຕະຫຼາດເຮັດໜ້າທີ່ເພື່ອຜົນປະໂຫຍດທາງດ້ານເສດຖະກິດສູງສຸດ.

ການວັດແທກມູນຄ່າຍຸດຕິທຳຂອງຊັບສິນທີ່ບໍ່ແມ່ນຊັບສິນທາງການເງິນ ຄວນຄຳນຶງເຖິງຄວາມສາມາດໃນການສ້າງຜົນປະໂຫຍດທາງເສດຖະກິດຂອງຜູ້ທີ່ເຂົ້າຮ່ວມໃນຕະຫຼາດໂດຍການນຳໃຊ້ຊັບສິນໃຫ້ເກີດຜົນປະໂຫຍດທາງເສດຖະກິດສູງສຸດ ຫຼື ໂດຍການຂາຍໃຫ້ຜູ້ທີ່ເຂົ້າຮ່ວມໃນຕະຫຼາດໃນການນຳໃຊ້ຊັບສິນໃຫ້ເກີດຜົນປະໂຫຍດສູງທີ່ສຸດ ແລະ ດີທີ່ສຸດ.

ບໍລິສັດໃຊ້ເທັກນິກການປະເມີນມູນຄ່າໃນສະຖານະການທີ່ເໝາະສົມ ແລະ ມີຂໍ້ມູນພຽງພໍໃນການວັດແທກມູນຄ່າຍຸດຕິທຳ ໂດຍການເພີ່ມການນຳໃຊ້ປະໂຫຍດຈາກການສັງເກດຂໍ້ມູນທີ່ປ້ອນເຂົ້າມາ ແລະ ການຫຼຸດຜ່ອນການນຳໃຊ້ປະໂຫຍດຈາກການທີ່ສັງເກດບໍ່ໄດ້ໃນຂໍ້ມູນທີ່ປ້ອນເຂົ້າມາ.

ຊັບສິນ ແລະ ຫນີ້ສິນທັງຫມົດທີ່ມີການວັດແທກມູນຄ່າຍຸດຕິທຳ ຫຼື ເປີດເຜີຍຂໍ້ມູນໃນເອກະສານລາຍງານທາງການເງິນ ໄດ້ຖືກຈັດກຸ່ມພາຍໃນລະດັບຊັ້ນຂອງມູນຄ່າຍຸດຕິທຳ ໂດຍອີງໃສ່ຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນໃນການວັດແທກມູນຄ່າຍຸດຕິທຳໂດຍລວມ ເຊິ່ງມີລາຍລະອຽດດັ່ງນີ້:

- ລະດັບທີ 1 - ອ້າງອີງລາຄາທາງຕະຫຼາດ (ບໍ່ໄດ້ດັດແກ້) ໃນຕະຫຼາດທີ່ມີການເຄື່ອນໄຫວການຈຳແນກຊັບສິນ ຫຼື ຫນີ້ສິນ

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.2 ການວັດແທກມູນຄ່າຍຸດຕິທຳ (ຕໍ່)

- ລະດັບທີ 2 - ເທັກນິກການປະເມີນມູນຄ່າສຳລັບການປ້ອນຂໍ້ມູນຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸດຕິທຳ ແມ່ນສັງເກດໄດ້ໂດຍທາງກົງ ຫຼື ທາງອ້ອມ
- ລະດັບທີ 3 - ເທັກນິກການປະເມີນມູນຄ່າສຳລັບການປ້ອນຂໍ້ມູນຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸດຕິທຳ ແມ່ນບໍ່ສາມາດສັງເກດໄດ້

ສຳລັບຊັບສິນ ແລະ ຫນີ້ສິນ ທີ່ໄດ້ຖືກຮັບຮູ້ໃນເອກະສານລາຍງານທາງການເງິນຕາມມູນຄ່າຍຸດຕິທຳບົນພື້ນຖານທີ່ເກີດຂຶ້ນ, ບໍລິສັດກຳນົດວ່າການໂອນນັ້ນເກີດຂຶ້ນລະຫວ່າງລະດັບໃນລຳດັບຊັ້ນໂດຍການປະເມີນໝວດຄືນ (ອີງໃສ່ລະດັບຂໍ້ມູນຕ່ຳສຸດທີ່ມີຄວາມສຳຄັນຕໍ່ກັບການວັດແທກມູນຄ່າຍຸດຕິທຳໂດຍລວມ) ນະທ້າຍມື້ອອກບົດລາຍງານໃນແຕ່ລະຄັ້ງ.

3.3 ອາກອນ

ອາກອນກຳໄລ

ອາກອນກຳໄລ ດ້ານຊັບສິນ ແລະ ຫນີ້ສິນທາງດ້ານອາກອນ ແມ່ນຖືກວັດແທກຈາກມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ ຫຼື ຊຳລະໃຫ້ເຈົ້າຫນ້າທີ່ສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນໄດ້ຖືກນຳໃຊ້ເພື່ອຄິດໄລ່ແມ່ນອັດຕາທີ່ໄດ້ຖືກບັງຄັບໃຊ້ ຫຼື ປະຕິບັດຢ່າງ ໃນມື້ອອກບົດລາຍງານ.

ອາກອນກຳໄລທີ່ກ່ຽວຂ້ອງກັບບັນດາລາຍການທີ່ໄດ້ຖືກຮັບຮູ້ໂດຍກົງໃນທຶນແມ່ນຖືກຮັບຮູ້ໃນທຶນ ແລະ ບໍ່ໄດ້ຢູ່ໃນໃບລາຍງານຜົນການດຳເນີນງານ. ຄະນະບໍລິຫານປະເມີນສະຖານະເປັນແຕ່ລະໄລຍະເວລາທີ່ໄດ້ຮັບໃນການເກັບຄືນອາກອນທີ່ກ່ຽວກັບສະຖານະການທີ່ກົດລະບຽບອາກອນທີ່ນຳໃຊ້ແມ່ນຂຶ້ນກັບການຕີຄວາມໝາຍ ແລະ ການກຳນົດຄ່າເສື່ອມທີ່ເໝາະສົມ.

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະໄດ້ຖືກນຳສະເຫນີຢູ່ໃນໃບລາຍງານຖານະການເງິນສຳລັບໄລຍະ 6 ເດືອນຕົ້ນປີ ໂດຍໃຊ້ວິທີໜີ້ສິນ ເມື່ອເກີດມີຜົນແຕກຕ່າງຊົ່ວຄາວ ນະວັນທີຂອງໃບລາຍງານການຖານະເງິນສຳລັບ 6 ເດືອນຕົ້ນປີລະຫວ່າງພື້ນຖານອາກອນທາງຊັບສິນ ແລະ ຫນີ້ສິນ ແລະ ມູນຄ່າຕາມບັນຊີທີ່ມີຢູ່ສຳລັບຈຸດປະສົງການລາຍງານທາງການເງິນ.

ອາກອນເຍື້ອນຊຳລະທາງໜີ້ສິນແມ່ນໄດ້ຖືກຮັບຮູ້ສຳລັບຄວາມແຕກຕ່າງຊົ່ວຄາວທາງອາກອນທັງໝົດ, ຍົກເວັ້ນ:

- ໃນກໍລະນີທີ່ຫນີ້ສິນທາງອາກອນລໍ້ຖ້າຊຳລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ຫນີ້ສິນໃນທຸລະກຳໃນເວລາຂອງທຸລະກຳທີ່ສິ່ງຜົນກະທົບທັງກຳໄລທາງການບັນຊີ ຫຼື ບໍ່ກໍ່ໃຫ້ເກີດ ກຳໄລ ຫຼື ຂາດທຶນທາງອາກອນ; ແລະ
- ໃນສ່ວນທີ່ກ່ຽວກັບຄວາມແຕກຕ່າງຊົ່ວຄາວທາງອາກອນ ທີ່ກ່ຽວຂ້ອງກັບການລົງທຶນໃນສາຂາໃນໄລຍະເວລາການເກັບຄືນສ່ວນຕ່າງຊົ່ວຄາວສາມາດຄວບຄຸມໄດ້ ແລະ ມີຄວາມເປັນໄປໄດ້ທີ່ວ່າສ່ວນຕ່າງຊົ່ວຄາວຈະບໍ່ເກັບຄືນມາໃນອະນາຄົດ.

ອາກອນເຍື້ອນຊຳລະທາງຊັບສິນໄດ້ຖືກຮັບຮູ້ສຳລັບຄວາມແຕກຕ່າງຊົ່ວຄາວທີ່ຫັກໄດ້, ໜີ້ສິນທາງອາກອນທີ່ບໍ່ໄດ້ນຳໃຊ້ຍົກໄປຫັກຕໍ່ ແລະ ຂາດທຶນທາງອາກອນທີ່ບໍ່ໄດ້ນຳໃຊ້, ໃນຂອບເຂດທີ່ວ່າອາດຈະເປັນໄປໄດ້ວ່າ ກຳໄລທາງອາກອນຈະເກີດຂຶ້ນຕໍ່ກັບສ່ວນຕ່າງຊົ່ວຄາວທີ່ຫັກໄດ້, ໜີ້ສິນທາງອາກອນທີ່ບໍ່ໄດ້ນຳໃຊ້ຍົກໄປຫັກຕໍ່ ແລະ ຂາດທຶນທາງອາກອນທີ່ບໍ່ໄດ້ນຳໃຊ້ ສາມາດນຳໄປຫັກລ້າງໃນການຈ່າຍອາກອນໄດ້, ຍົກເວັ້ນ

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 ອາກອນ (ຕໍ່)

- ໃນກໍລະນີທີ່ຊັບສິນທາງອາກອນລໍຖ້າຫໍາລະສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກໍາ ໃນເວລາຂອງທຸລະກໍາທີ່ສົ່ງຜົນກະທົບທັງກໍາໄລທາງການບັນຊີ ຫຼື ບໍ່ກໍ່ກໍາໄລ ຫຼື ຂາດທຶນທາງອາກອນ; ແລະ
- ໃນສ່ວນທີ່ກ່ຽວກັບຄວາມແຕກຕ່າງຊົ່ວຄາວທາງອາກອນ ທີ່ກ່ຽວຂ້ອງກັບການລົງທຶນໃນຊັບສິນທາງອາກອນລໍຖ້າຫໍາລະສະສາງບໍລິສັດສາຂາ ໄດ້ຖືກຮັບຮູ້ໃນເຂດເຂດທີ່ມີຄວາມເປັນໄປໄດ້ວ່າສ່ວນຕ່າງຊົ່ວຄາວຈະເກັບຄືນມາໃນອະນາຄົດ ແລະ ກໍາໄລທາງອາກອນຈະສາມາດນໍາໃຊ້ໄດ້ຕໍ່ກັບຄວາມແຕ່ກຕ່າງຊົ່ວຄາວສາມາດນໍາໃຊ້ໄດ້ຕໍ່.

ມູນຄ່າບັນຊີຂອງຊັບສິນອາກອນລໍຖ້າຫໍາລະສະສາງແມ່ນຖືກທົບທວນໃນວັນທີຂອງເອກະສານລາຍງານການເງິນ ແລະ ຫຼຸດໃນຂອບເຂດທີ່ບໍ່ມີຄວາມເປັນໄປໄດ້ວ່າກໍາໄລທາງອາກອນພຽງພໍທີ່ຈະອະນຸຍາດໃຫ້ເກັບຄືນໄດ້ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ. ລາຍຮັບທາງຊັບສິນອາກອນລໍຖ້າຫໍາລະສະສາງທີ່ຍັງບໍ່ສາມາຮັບຮູ້ຜ່ານມາ ແມ່ນໄດ້ຖືກປະເມີນໃຫມ່ ນະວັນທີຂອງໃບລາຍງານຖານະທາງການເງິນ ແລະ ໄດ້ຖືກຮັບຮູ້ໄດ້ກໍ່ຕໍ່ເມື່ອມີກໍາໄລໃນອະນາຄົດ ຈຶ່ງຈະອະນຸຍາດໃຫ້ຮຽກເກັບຄືນຊັບສິນຂອງອາກອນລໍຖ້າຫໍາລະສະສາງ.

ຊັບສິນ ແລະ ໜີ້ສິນໃນລາຍຮັບທາງອາກອນລໍຖ້າຫໍາລະສະສາງໄດ້ຖືກວັດແທກຕາມອັດຕາອາກອນທີ່ຄາດວ່າຈະນໍາໃຊ້ໃນປີເມື່ອຊັບສິນຖືກຮັບຮູ້ ຫຼື ໜີ້ສິນຖືກຫໍາລະສະສາງອີງຕາມອັດຕາອາກອນ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນທີ່ໄດ້ຖືກກໍານົດໃນວັນທີຂອງໃບລາຍງານຖານະການເງິນ.

ອາກອນລໍຖ້າຫໍາລະສະສາງບັນທຶກໃນໃບລາຍງານຜົນການດໍາເນີນງານສໍາລັບ 6 ເດືອນຕົ້ນປີ, ຍົກເວັ້ນເມື່ອກ່ຽວຂ້ອງກັບລາຍການທີ່ຖືກຮັບຮູ້ໂດຍກົງໃນທຶນ, ໃນກໍລະນີທີ່ອາກອນລໍຖ້າຫໍາລະສະສາງແມ່ນກ່ຽວຂ້ອງກັບທຶນ.

ຊັບສິນອາກອນລໍຖ້າຫໍາລະສະສາງ ແລະ ໜີ້ສິນອາກອນລໍຖ້າຫໍາລະສະສາງ ຈະຖືກຫັກລ້າງ ຖ້າຫາກວ່າມີສິດນໍາໃຊ້ຕາມກົດໝາຍ ເພື່ອຫັກລ້າງກັບຊັບອາກອນລໍຖ້າຫໍາລະສະສາງໃນປີຕໍ່ກັບລາຍຮັບໜີ້ສິນອາກອນໃນປີ ແລະ ອາກອນລໍຖ້າຫໍາລະສະສາງທີ່ກ່ຽວຂ້ອງກັບໜ່ວຍງານທາງອາກອນແບບດຽວກັນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນແບບດຽວກັນ:

- ໜ່ວຍງານທີ່ຕ້ອງເສຍອາກອນແບບດຽວກັນ;
- ຫຼື ໃນເວລາທີ່ບໍລິສັດມີຄວາມຕັ້ງໃຈທີ່ຈະຊໍາລະໜີ້ສິນ ແລະ ຊັບສິນທາງອາກອນໃນປີຕາມຫຼັກການສຸດທິ ຫຼື ເພື່ອຮັບຮູ້ຊັບສິນ ແລະ ຊໍາລະໜີ້ສິນໃນເວລາດຽວກັນ, ແຕ່ລະໄລຍະໃນອະນາຄົດ ເຊິ່ງມູນຄ່າທີ່ໃຫຍ່ຫຼວງໃນໜີ້ສິນ ຫຼື ຊັບສິນທາງອາກອນລໍຖ້າຫໍາລະສະສາງ ໄດ້ຖືກຄາດວ່າຈະຖືກຊໍາລະ ຫຼື ເກັບຄືນ.

ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມຂອງລາຍຮັບຈາກຄ່າເຊົ່າ ແລະ ຈາກລາຍຮັບອື່ນໆເປັນພຽງການຮັບຮູ້, ປະກາດ ແລະ ຈ່າຍສໍາລັບລູກຄ້າທີ່ໄດ້ຮັບໃບບິນອາກອນມູນຄ່າເພີ່ມຈາກບໍລິສັດເທົ່ານັ້ນ.

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4 ເງິນຕາຕ່າງປະເທດ

ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແມ່ນສະແດງເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງບໍລິສັດ. ການເຮັດທຸລະກຳທີ່ເປັນສະກຸນເງິນຕ່າງປະເທດໃນເບື້ອງຕົ້ນແມ່ນ ບັນທຶກໂດຍບໍລິສັດ ໂດຍການນຳໃຊ້ອັດຕາແລກປ່ຽນທີ່ມີຢູ່ນະວັນທີ່ທຸລະກຳເກີດຂຶ້ນເພື່ອຮັບຮູ້ ຊັບສິນ ແລະ ຫນີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າຄືນໃຫມ່ເປັນສະກຸນເງິນຫຼັກໃນມື້ຂອງການລາຍງານ.

ສ່ວນຕ່າງທີ່ເກີດຂຶ້ນໃນການຊຳລະສະສາງ ຫຼື ຕີມູນຄ່າລາຍການທີ່ເປັນເງິນຕາຕ່າງປະເທດໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດສຳລັບ 6 ເດືອນຕົ້ນປີ.

ລາຍການທີ່ບໍ່ແມ່ນເງິນທີ່ໄດ້ວັດແທກຈາກມູນຄ່າຕົ້ນທຶນເດີມໃນສະກຸນເງິນຕາຕ່າງປະເທດ ແມ່ນຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີຂອງທຸລະກຳເບື້ອງຕົ້ນ. ລາຍການທີ່ບໍ່ແມ່ນເງິນທີ່ຖືກວັດແທກໃນມູນຄ່າຍຸດຕິທຳໃນສະກຸນເງິນຕ່າງປະເທດແມ່ນໄດ້ຖືກຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີ່ມູນຄ່າຍຸດຕິທຳໄດ້ຖືກກຳນົດ

3.5 ຊັບເພື່ອການລົງທຶນ

ຊັບສິນເພື່ອການລົງທຶນປະກອບມີ ຊັບສິນທີ່ຄອບຄອງສົມບູນໄວ້ເພື່ອໃຫ້ເຊົ່າ ຫຼື ສຳລັບການເພີ່ມທຶນ ຫຼື ທັງສອງ. ຊັບສິນທີ່ຖືໄວ້ພາຍໃຕ້ການເຊົ່າຖືກຈັດປະເພດເປັນຊັບສິນເພື່ອການລົງທຶນເມື່ອມີການເກັບຄ່າເຊົ່າ ຫຼື ເພື່ອສ້າງມູນຄ່າເພີ່ມ ຫຼື ທັງສອງ, ຫຼາຍກວ່າວັດຖຸປະສົງເພື່ອການຂາຍໃນກິດຈະກຳປົກກະຕິຂອງທຸລະກິດ ຫຼື ສຳລັບການນຳໃຊ້ໃນການຜະລິດ ຫຼື ການບໍລິຫານ.

ຊັບສິນເພື່ອລົງທຶນແມ່ນໄດ້ຖືກວັດແທກໃນເບື້ອງຕົ້ນຈາກຕົ້ນທຶນ, ລວມທັງຕົ້ນທຶນຂອງທຸລະກຳ. ຕົ້ນທຶນຂອງທຸລະກຳປະກອບມີການໂອນອາກອນ, ຄ່າທຳນຽມດ້ານວິຊາຊີບສຳລັບການບໍລິການດ້ານກົດໝາຍ ແລະ ຄ່າທຳນຽມການເຊົ່າເບື້ອງຕົ້ນເພື່ອນຳໃຊ້ຊັບສິນໃນເງື່ອນໄຂທີ່ຈຳເປັນໃຫ້ສາມາດດຳເນີນການໄດ້. ມູນຄ່າຕາມບັນຊີປະກອບມີຄ່າໃຊ້ຈ່າຍໃນການປ່ຽນສ່ວນຫນຶ່ງຂອງຊັບສິນໃນແຕ່ລະເວລາທີ່ຕົ້ນທຶນໄດ້ເກີດຂຶ້ນ ຖ້າຫາກວ່າຄົບຕາມເງື່ອນໄຂການຮັບຮູ້.

ຫຼັງຈາກການຮັບຮູ້ເບື້ອງຕົ້ນ, ຊັບສິນເພື່ອການລົງທຶນຈະຖືກບັນທຶກໄວ້ໃນຕາມມູນຄ່າຍຸດຕິທຳ ເຊິ່ງສະທ້ອນໃຫ້ເຫັນເຖິງເງື່ອນໄຂຂອງຕະຫຼາດນະວັນທີລາຍງານ. ກຳໄລ ຫຼື ຂາດທຶນຈາກການປ່ຽນແປງໃນມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ ລວມຢູ່ໃນ ກຳໄລ ຫຼື ຂາດທຶນໃນໄລຍະເວລາທີ່ເກີດຂຶ້ນ ລວມທັງຜົນກະທົບຈາກອາກອນທີ່ກ່ຽວຂ້ອງ.

ການໂອນແມ່ນປ່ຽນເປັນ (ຫຼື ຈາກ) ຊັບສິນເພື່ອລົງທຶນເກີດຂຶ້ນກໍ່ຕໍ່ເມື່ອມີການປ່ຽນແປງໃນການນຳໃຊ້ເທົ່ານັ້ນ. ສຳລັບການໂອນຊັບສິນເພື່ອລົງທຶນໃຫ້ມາເປັນຊັບສິນຂອງເຈົ້າຂອງ, ຄ່າໃຊ້ຈ່າຍທີ່ເກີດຂຶ້ນສຳລັບການບັນທຶກບັນຊີຕໍ່ມາແມ່ນມູນຄ່າຍຸດຕິທຳນະວັນທີ່ມີການປ່ຽນແປງໃນການນຳໃຊ້.

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.5 *ຊັບສິນເພື່ອການລົງທຶນ* (ຕໍ່)

ຊັບສິນເພື່ອການລົງທຶນແມ່ນບໍ່ຮັບຮູ້ຊັບສິນເມື່ອຕັດອອກບັນຊີ ຫຼື ເມື່ອຖືກຖອນອອກຈາກການນຳໃຊ້ແບບຖາວອນ ແລະ ຄາດວ່າຈະບໍ່ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດໃນອະນາຄົດຈາກການຕັດອອກບັນຊີ. ຄວາມແຕກຕ່າງລະຫວ່າງຂັ້ນຕອນການຕັດອອກບັນຊີສຸດທິ ແລະ ມູນຄ່າຕາມບັນຊີຂອງຊັບສິນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນໃນໄລຍະເວລາບໍ່ຮັບຮູ້.

3.6 *ການຮັກສາຊັບສິນທີ່ບໍ່ແມ່ນການເງິນ*

ບໍລິສັດໄດ້ປະເມີນນະວັນທີລາຍງານວ່າຊັບສິນດັ່ງກ່າວມີການເສື່ອມມູນຄ່າ ຫຼື ບໍ່. ເມື່ອມີການເສື່ອມມູນຄ່າເກີດຂຶ້ນ ຫຼື ເມື່ອມີການກວດການເສື່ອມມູນຄ່າປະຈຳປີຂອງຊັບສິນທີ່ຖືກຮຽກຮ້ອງ, ບໍລິສັດຈະມີການປະເມີນມູນຄ່າທີ່ຄາດວ່າຈະໄດ້ຮັບຄືນຂອງຊັບສິນ. ມູນຄ່າເກັບຄືນຂອງຊັບສິນແມ່ນມູນຄ່າຍຸດຕິທຳທີ່ສູງກວ່າຂອງຊັບສິນ ຫຼື ໜ່ວຍທີ່ເຮັດໃຫ້ເກີດເງິນສົດ ຫັກຕົ້ນທຶນການຂາຍ ແລະ ມູນຄ່າທີ່ໄດ້ນຳໃຊ້ ແລະ ຖືກພິຈາລະນາເປັນແຕ່ລະລາຍຊັບສິນ, ເວັ້ນເສຍແຕ່ວ່າຊັບສິນບໍ່ກໍ່ໃຫ້ເກີດກະແສເງິນສົດທີ່ເປັນເອກະລາດຈາດຊັບສິນອື່ນໆ ຫຼື ຊັບສິນຂອງບໍລິສັດ. ເມື່ອມູນຄ່າຕາມບັນຊີຂອງຊັບສິນ ຫຼື ໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດສູງກວ່າມູນຄ່າທີ່ຈະໄດ້ຮັບຄືນ, ຊັບສິນດັ່ງກ່າວຈະຖືກພິຈາລະນາວ່າເສື່ອມມູນຄ່າ ແລະ ຖືກບັນທຶກວ່າເປັນມູນຄ່າທີ່ຈະໄດ້ຮັບຄືນ.

ໃນການປະເມີນມູນຄ່າການນຳໃຊ້, ການຄາດຄະເນກະແສເງິນສົດໃນອະນາຄົດແມ່ນຈະຖືກຫຼຸດມູນຄ່າລົງຈາກມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາຫຼຸດກ່ອນອາກອນທີ່ສະທ້ອນເຖິງການປະເມີນມູນຄ່າປະຈຸບັນຂອງເງິນໃນຕະຫຼາດປະຈຸບັນ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບຊັບສິນ. ໃນການປະເມີນມູນຄ່າຍຸດຕິທຳຫັກຕົ້ນທຶນການຂາຍ, ທຸລະກຳໃນຕະຫຼາດປະຈຸບັນແມ່ນຈະຖືກນຳມາພິຈາລະນາ, ຖ້າມີ. ຫາກບໍ່ມີທຸລະກຳດັ່ງກ່າວ, ຮູບແບບການປະເມີນທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ເຫຼົ່ານີ້ແມ່ນໄດ້ຮັບການຢືນຢັນໂດຍການປະເມີນໃນຫຼາຍມູນຄ່າ, ລາຄາຮຸ້ນສຳລັບບໍລິສັດທີ່ມີການຊື້ຂາຍໃນຕະຫຼາດຫຼັກຊັບ ຫຼື ຕົວຊີ້ວັດມູນຄ່າຍຸດຕິທຳອື່ນໆທີ່ມີຢູ່.

ບໍລິສັດໄດ້ມີການຄິດໄລ່ຄ່າເສື່ອມມູນຄ່າໂດຍອີງຕາມລາຍລະອຽດຂອງງົບປະມານ ແລະ ການຄາດຄະເນການຄິດໄລ່ໂດຍລວມຂອງບໍລິສັດຄືກັນກັບໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ. ໂດຍທົ່ວໄປແລ້ວ ງົບປະມານ ແລະ ການຄາດຄະເນການຄິດໄລ່ເຫຼົ່ານີ້ແມ່ນຈະກວມເອົາໄລຍະເວລາ 5 ປີ. ສຳລັບໄລຍະເວລາທີ່ຍາວກວ່ານີ້, ອັດຕາການເຕີບໂຕໃນໄລຍະຍາວຈະຖືກຄິດໄລ່ ແລະ ນຳໃຊ້ກັບກະແສເງິນສົດໃນອະນາຄົດທີ່ກຳນົດພາຍຫຼັງປີທີ 5.

ການຂາດທຶນຈາກການເສື່ອມມູນຄ່າ ຂອງການດຳເນີນງານຢ່າງຕໍ່ເນື່ອງຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນປະເພດຄ່າໃຊ້ຈ່າຍ ເຊິ່ງສອດຄ່ອງກັບໜ້າທີ່ຂອງຊັບສິນທີ່ເສື່ອມມູນຄ່າ, ຍົກເວັ້ນຊັບສິນທີ່ໄດ້ຮັບການຕີລາຄາກ່ອນໜ້າ, ເຊິ່ງການຕີລາຄາຄືນໃໝ່ສະແດງຢູ່ໃນໃບລາຍງານຜົນການດຳເນີນງານ. ໃນກໍລະນີນີ້, ການເສື່ອມມູນຄ່າແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບໍ່ເກີນຈຳນວນທີ່ຕີລາຄາຜ່ານມາ.

ສຳລັບຊັບສິນທີ່ບໍ່ໄດ້ລວມຄ່ານິຍົມ, ການປະເມີນຈະຖືກດຳເນີນງານໃນແຕ່ລະມື້ທີ່ມີການລາຍງານວ່າມີຂໍ້ບົ່ງຊີ້ທີ່ສະແດງໃຫ້ເຫັນວ່າຄ່າສູນເສຍມູນຄ່າທີ່ຖືກຮັບຮູ້ຜ່ານມາອາດຈະບໍ່ມີຢູ່ ຫຼື ອາດຈະຫຼຸດລົງ. ຖ້າຫາກມີຂໍ້ບົ່ງຊີ້ດັ່ງກ່າວ, ບໍລິສັດຈະປະເມີນມູນຄ່າທີ່ໄດ້ຮັບຄືນຂອງຊັບສິນ ຫຼື ໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ. ຄ່າເສື່ອມມູນຄ່າທີ່ໄດ້ຖືກຮັບຮູ້ຜ່ານມາແມ່ນຈະຖືກເກັບຄືນ ຖ້າຫາກວ່າມີການປ່ຽນແປງໃນການຄາດຄະເນທີ່ໃຊ້ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຈາກການຮັບຮູ້ຄັ້ງສຸດທ້າຍຂອງການສູນເສຍທີ່ໄດ້ຖືກຮັບຮູ້. ການເກັບຄືນ ແມ່ນຈະຖືກຈຳກັດ ເນື່ອງຈາກວ່າມູນຄ່າຕາມບັນຊີຂອງຊັບສິນຈະບໍ່ເກີນມູນຄ່າເກັບຄືນ, ຫຼື ບໍ່ເກີນມູນຄ່າຕາມບັນຊີທີ່ໄດ້ກຳນົດໄວ້, ລົບຄ່າເສື່ອມ, ບໍ່ມີການຂາດທຶນຈາກການເສື່ອມມູນຄ່າທີ່ຖືກຮັບຮູ້ໃນປີທີ່ຜ່ານມາ. ການເກັບຄືນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເວັ້ນເສຍແຕ່ວ່າຊັບສິນຈະຖືກຕີມູນຄ່າຄືນໃໝ່, ໃນກໍລະນີນີ້ການເກັບຄືນຖືເປັນການເພີ່ມຂຶ້ນຂອງການຕີລາຄາໃໝ່.

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.6 ການຮັກສາຊັບສິນທີ່ບໍ່ແມ່ນການເງິນ (ຕໍ່)

ຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸດການໃຊ້ງານທີ່ບໍ່ຈຳກັດແມ່ນໄດ້ຖືກທົດສອບການເສື່ອມມູນຄ່າໃນແຕ່ລະປີໃນລະດັບໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ ຕາມຄວາມເໝາະສົມ, ແລະ ໃນເວລາສະຖານະການທີ່ຊີ້ໃຫ້ເຫັນວ່າມູນຄ່າຕາມບັນຊີອາດຈະເກີດຄ່າເສື່ອມ.

3.7 ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ.

3.8 ຄ່າເຊົ່າ ແລະ ໜີ້ຕ້ອງຮັບອື່ນໆ

ຄ່າເຊົ່າ ແລະ ໜີ້ຕ້ອງຮັບອື່ນໆແມ່ນຖືກຮັບຮູ້ໃນມູນຄ່າເດີມໃນໃບຮຽກເກັບເງິນ ເວັ້ນເສຍແຕ່ມູນຄ່າຕາມເວລາຂອງເງິນແມ່ນມີຄວາມສຳຄັນ, ເຊິ່ງໃນກໍລະນີທີ່ໜີ້ຕ້ອງຮັບຖືກຮັບຮູ້ໃນມູນຄ່າຍຸດຕິທຳ ແລະ ວັດແທກມູນຄ່າໃນຕົ້ນທຶນຄ່າເສື່ອມ.

ເງິນແຮຈະຖືກບັນທຶກເມື່ອມີຫຼັກຖານທີ່ຊັດເຈນວ່າ ບໍລິສັດຈະບໍ່ສາມາດເກັບຄືນໄດ້ເຕັມຈຳນວນ.

ຍອດຄົງເຫຼືອຈະຖືກຕັດອອກເມື່ອຄວາມເປັນໄປໄດ້ຂອງການເກັບຄືນໄດ້ຖືກປະເມີນວ່າຍັງໜ້ອຍຫຼາຍ.

3.9 ເງິນຝາກຂອງຜູ້ເຊົ່າ

ໜີ້ສິນເງິນຝາກຂອງຜູ້ເຊົ່າແມ່ນຖືກຮັບຮູ້ເລີ່ມຈາກມູນຄ່າຍຸດຕິທຳ ແລະ ໄດ້ຮັບການວັດມູນຄ່າທີ່ຕ້ອງຈ່າຍໃນອານາຄົດ.

ສ່ວນຜິດຕ່າງລະຫວ່າງມູນຄ່າຍຸດຕິທຳເບື້ອງຕົ້ນ ແລະ ມູນຄ່າທີ່ກຳນົດໄວ້ແມ່ນຖືກລວມເປັນສ່ວນໜຶ່ງຂອງລາຍຮັບຄ່າເຊົ່າໃນການດຳເນີນງານ ແລະ ຖືກຮັບຮູ້ຕາມວິທີເສັ້ນຊື່ຕາມໄລຍະເວລາເຊົ່າ

3.10 ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມ

ເງິນກູ້ ແລະ ການກູ້ຢືມແມ່ນຖືກຮັບຮູ້ໃນມູນຄ່າຍຸດຕິທຳຫັກຕົ້ນທຶນທຸລະກຳທີ່ກ່ຽວຂ້ອງໂດຍກົງ. ພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ,ຍເງິນກູ້ ແລະ ການກູ້ຢືມແມ່ນໄດ້ຮັບການວັດມູນຄ່າທີ່ຕ້ອງຈ່າຍໃນອານາຄົດ. ອັດຕາດອກເບ້ ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມແມ່ນຈະຖືກຄິດໄລ່ຈາກອັດຕາດອກເບ້ຍທີ່ກຳນົດຕາມສັນຍາ.

3.11 ສັນຍາເຊົ່າ

ການພິຈາລະນາວ່າການຕົກລົງແມ່ນ (ຫຼື ປະກອບດ້ວຍ) ການເຊົ່າ ແມ່ນອີງໃສ່ຄວາມໝາຍທີ່ແທ້ຈິງຂອງການຕົກລົງໃນການຮັບຮູ້ການເຊົ່າ. ການຕົກລົງແມ່ນ, ຫຼື ປະກອບດ້ວຍ, ສັນຍາເຊົ່າ ຖ້າຫາກວ່າການປະຕິບັດຕາມຂໍ້ຕົກລົງນີ້ແມ່ນເປັນເອກະລາດໃນການໃຊ້ຊັບສິນສະເພາະ ຫຼື ຊັບສິນ ຫຼື ການຕົກລົງໄດ້ຖືກໂອນສິດການນຳໃຊ້ຊັບສິນ ຫຼື ຊັບສິນຕ່າງ, ເຖິງແມ່ນວ່າສິດນັ້ນບໍ່ໄດ້ກຳນົດຊັດເຈນໃນການຕົກລົງ.

ບໍລິສັດເປັນຜູ້ໃຫ້ເຊົ່າ

ການເຊົ່າທີ່ບໍລິສັດບໍ່ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຄວາມເປັນເຈົ້າໃນຊັບສິນໄດ້ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານ. ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຈາກການເຈລະຈາ ແລະ ການດຳເນີນການເຊົ່າຈະລວມຢູ່ໃນມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ແລະ ຖືກຮັບຮູ້ຄືນຕະຫຼອດອາຍຸດສັນຍາເຊົ່າໂດຍໃຊ້ຫຼັກເກນດຽວກັບລາຍຮັບຄ່າເຊົ່າ. ຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຮັບໃນໄລຍະທີ່ໄດ້ລາຍຮັບ.

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12 ຄ້ຳສຳຮອງ

ອີງຕາມມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ບໍລິສັດຮຽກຮ້ອງໃຫ້ຫັກເງິນແຮ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າຄ້ຳສຳຮອງຕາມກົດໝາຍ. ເມື່ອຄ້ຳສົ່ງຮອງດັ່ງກ່າວບັນລຸ 50% ຂອງເງິນທຶນຈົດທະບຽນ, ບໍລິສັດອາດຈະເລື່ອນການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດ.

ການຈັດສັນກຳໄລເຂົ້າຄ້ຳເພື່ອຂະຫຍາຍກິດຈະການແມ່ນສອດຄ່ອງກັບມາດຕາ 16 ຂອງຂໍ້ກຳນົດຂອງບໍລິສັດ. ສຳລັບໄລຍະເວລາແຕ່ວັນທີ 1 ມັງກອນ 2018 ເຖິງ 30 ມິຖຸນາ 2018, ບໍລິສັດໄດ້ສຳຮອງ 10% ຂອງກຳໄລເຂົ້າຄ້ຳເພື່ອຂະຫຍາຍທຸລະກິດ.

3.13 ການຮັບຮູ້ລາຍຮັບ

ລາຍຮັບແມ່ນໄດ້ຖືກບັນທຶກໄວ້ໃນຂອບເຂດທີ່ຄາດວ່າ ຜົນປະໂຫຍດທາງເສດຖະກິດຈະໄຫຼເຂົ້າບໍລິສັດ ແລະ ລາຍຮັບສາມາດຮັບຮູ້ໄດ້ຢ່າງໜ້າເຊື່ອຖື ເວັ້ນເສຍແຕ່ວ່າເວລາທີ່ການຈ່າຍເງິນຈະຖືກຮັບ. ລາຍຮັບຖືກວັດແທກຢູ່ໃນມູນຄ່າຍຸດຕິທຳຂອງການພິຈາລະນາທີ່ໄດ້ຮັບ ຫຼື ໜີ້ຕ້ອງຮັບ, ເຊິ່ງບັນຊຸເງື່ອນໄຂການຈ່າຍເງິນທີ່ຖືກກຳນົດໄວ້ໃນສັນຍາ ແລະ ບໍ່ລວມອາກອນ ຫຼື ພາສີ.

ເງື່ອນໄຂການຮັບຮູ້ສະເພາະທີ່ລະບຸໄວ້ຂ້າງລຸ່ມນີ້ຕ້ອງໄດ້ຮັບການຕອບສະໜອງກ່ອນທີ່ຈະຮັບຮູ້ລາຍຮັບ.

ລາຍຮັບຄ່າເຊົ່າ

ບໍລິສັດແມ່ນຜູ້ໃຫ້ເຊົ່າໃນການເຊົ່າເພື່ອການດຳເນີນງານ. ລາຍຮັບຄ່າເຊົ່າທີ່ເກີດຂຶ້ນຈາກການເຊົ່າເພື່ອການດຳເນີນງານໃນຊັບສິນເພື່ອການລົງທຶນແມ່ນກ່ຽວຂ້ອງຕາມຫຼັກການເສັ້ນຊື່ໃນໄລຍະເວລາການເຊົ່າ ແລະ ລວມຢູ່ໃນລາຍຮັບໃນລາຍຮັບໃນໃບລາຍງານຜົນການດຳເນີນງານໃນ 6 ເດືອນຕົ້ນປີເນື່ອງຈາກລັກສະນະການດຳເນີນງານ, ຍົກເວັ້ນລາຍຮັບຈາກຄ່າເຊົ່າທີ່ບໍ່ແນ່ນອນທີ່ໄດ້ຖືກຮັບຮູ້ເມື່ອເກີດຂຶ້ນ.

ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຂຶ້ນໃນການເຈລະຈາ ແລະ ການຕົກລົງໃນການເຊົ່າເພື່ອການດຳເນີນງານແມ່ນໄດ້ຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາການເຊົ່າຕາມພື້ນຖານດຽວກັນກັບລາຍຮັບຈາກການເຊົ່າ.

ແຮງຈູງໃຈໃນການເຊົ່າໃຫ້ຜູ້ເຊົ່າໄດ້ຖືກຮັບຮູ້ເປັນການຫຼຸດລາຍຮັບຈາກລາຍຮັບຄ່າເຊົ່າໂດຍວິທີເສັ້ນຊື່ຕະຫຼອດໄລຍະເວລາຂອງອາຍຸດສັນຍາເຊົ່າ. ໄລຍະເວລາການເຊົ່າແມ່ນໄລຍະເວລາທີ່ຍົກເລີກບໍ່ໄດ້ຂອງການເຊົ່າ ພ້ອມກັບໄລຍະເວລາເພີ່ມເຕີມທີ່ຜູ້ເຊົ່າມີທາງເລືອກທີ່ຈະສືບຕໍ່ການເຊົ່າ, ໃນເວລາຮັບຮູ້ການເຊົ່າ, ທີ່ຜູ້ອຳນວຍການແມ່ນມີຄວາມແນ່ໃຈຢ່າງສົມເຫດສົມຜົນວ່າຜູ້ເຊົ່າຈະໃຊ້ຕົວເລືອກນັ້ນ.

ຈຳນວນເງິນທີ່ໄດ້ຮັບຈາກຜູ້ເຊົ່າເພື່ອຢຸດການເຊົ່າ ຫຼື ຊົດເຊີຍການສູນເສຍທີ່ຖືກຮັບຮູ້ໃນລາຍງານຜົນການດຳເນີນງານໃນ 6 ເດືອນຕົ້ນປີເວລາທີ່ສິດທີ່ຈະໄດ້ຮັບພວກເຂົາເກີດຂຶ້ນ.

ລາຍຮັບອື່ນໆ

ລາຍຮັບອື່ນໆປະກອບດ້ວຍລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາ, ການຈັດກິດຈະກຳ. ລາຍຮັບເຫຼົ່ານີ້ແມ່ນຖືກຮັບຮູ້ໃນໄລຍະການໃຫ້ບໍລິການ.

3. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.13 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC")

ລາຍໄດ້ຈາກສັນຍາການຮ່ວມມືທຸລະກິດ ("BCC") ແມ່ນຖືກຮັບຮູ້ຕາມນະໂຍບາຍການບັນຊີທີ່ສະແດງໃນບົດອະທິບາຍ ເລກທີ 3.15

ລາຍຮັບດອກເບ້ຍ

ລາຍຮັບດອກເບ້ຍໄດ້ຖືກຮັບຮູ້ເພາະວ່າເປັນການຄ້າງຮັບໂດຍນຳໃຊ້ວິທີການອັດຕາດອກເບ້ຍທີ່ແທ້ຈິງ (EIR). EIR ແມ່ນ ອັດຕາທີ່ຫຼຸດລົງຢ່າງແນ່ນອນຂອງລາຍຮັບເງິນສົດໃນອະນາຄົດຕະຫຼອດໄລຍະເວລາທີ່ຄາດຫວັງຂອງເຄື່ອງມືທາງການເງິນ ຫຼື ໄລຍະເວລາທີ່ສັ້ນກວ່າ, ຕາມເໝາະສົມ, ເພື່ອຫັກກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນ. ລາຍຮັບດອກເບ້ຍ ແມ່ນລວມຢູ່ໃນລາຍຮັບທາງການເງິນໃນໃບລາຍງານຜົນການດຳເນີນງານ.

3.14 ຕົ້ນທຶນການກູ້ຢືມ

ຕົ້ນທຶນການກູ້ຢືມມີຄຸນສົມບັດໂດຍກົງເພື່ອໃຫ້ໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຊັບສິນທີ່ຕ້ອງໃຊ້ໄລຍະເວລາ ເພື່ອໃຫ້ ພ້ອມສຳລັບການໃຊ້ ຫຼື ການຂາຍແມ່ນຖືກບັນທຶກເປັນສ່ວນຫນຶ່ງຂອງຕົ້ນທຶນຂອງຊັບສິນນັ້ນ. ຕົ້ນທຶນການກູ້ຢືມອື່ນໆຈະ ບັນທຶກເປັນຄ່າໃຊ້ຈ່າຍໃນໄລຍະເວລາທີ່ເກີດຂຶ້ນ. ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຕົ້ນທຶນອື່ນໆທີ່ເກີດຂຶ້ນ ຈາກການກູ້ຢືມນັ້ນ.

3.15 ສັນຍາການຮ່ວມມືດ້ານທຸລະກິດ ("BCC") ໃນຮູບແບບການດຳເນີນງານທີ່ຄວບຄຸມຮ່ວມກັນ

ສັນຍາການຮ່ວມມືດ້ານທຸລະກິດແມ່ນການດຳເນີນງານທີ່ບໍ່ໄດ້ປະກອບເປັນໜ່ວຍງານໃໝ່, ຂາຮຸ້ນຂອງ BCC ແມ່ນມີພັນທະ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມທີ່ໄດ້ລະບຸໄວ້ໃນສັນຍາ. ກິດຈະກຳຂອງ BCC ແມ່ນປະຕິບັດພ້ອມກັນກັບກິດຈະກຳ ການດຳເນີນງານປະຈຳຂອງຂາຮຸ້ນ.

ບໍລິສັດໄດ້ຮັບຮູ້ລາຍຮັບຈາກ BCC ແລະ ພາລະຜູກພັນທາງອາກອນມູນຄ່າເພີ້ມທີ່ກ່ຽວຂ້ອງຕາມລາຍຮັບລວມຂອງສັນຍາ. ສ່ວນກຳໄລຂອງຂາຮຸ້ນອື່ນເປັນຄ່າໃຊ້ຈ່າຍ.

ຈາກນັ້ນບໍລິສັດຮັບຮູ້ໜີ້ສິນຕາມສັນຍາເຊົ່າຊື້ທີ່ມີກັບລູກໜີ້ການຄ້າສຸດທິ. ອາກອນມູນຄ່າເພີ່ມແມ່ນເກີດຂຶ້ນຈາກສັນຍາທີ່ ປະກາດ ແລະ ຈ່າຍຕາມລາຍຮັບສຸດທິທີ່ໄດ້ຮັບຈາກບໍລິສັດ.

ລາຍລະອຽດຂອງການດຳເນີນງານທີ່ບໍລິສັດທີ່ມີໃນປະຈຸບັນ ມີຢູ່ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເລກ ທີ 4

4. ລາຍຮັບ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ລາຍຮັບຈາກສັນຍາການຮ່ວມມື (*)	10,193,227,273	9,853,376,818
ລາຍຮັບຈາກການເຊົ່າ	3,939,126,346	4,049,157,643
	14,132,353,619	**13,902,534,461**

(*) ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ Major Platinum Cineplex (ລາວ) ຈຳກັດ (MAJOR), ບໍລິສັດໄດ້ໃຫ້ເຊົ່າໃນໄລຍະເວລາ 20 ປີ ນັບແຕ່ ວັນທີ 7 ສິງຫາ 2015 ເຖິງ ວັນທີ 6 ສິງຫາ 2035 ໃນສ່ວນຂອງຊັບສິນເພື່ອການລົງທຶນເຂົ້າໃນການດຳເນີນງານທາງດ້ານໂຮງໜັງກັບ MAJOR. ລາຍຮັບຈາກການດຳເນີນງານຂອງໂຮງໜັງ ແມ່ນແບ່ງກັນລະຫວ່າງບໍລິສັດ ແລະ MAJOR ໃນອັດຕາຄົງທີ່ຕາມການກຳນົດໄວ້ໃນສັນຍາ. ລາຍຮັບທັງຫມົດຈາກໂຮງໜັງ ພາຍໃນໄລຍະ ໄດ້ຖືກຮັບຮູ້ເປັນລາຍຮັບຂອງບໍລິສັດ ແລະ ສ່ວນແບ່ງຂອງ MAJOR ໃນຈຳນວນ 8,884,271,110 ກີບ *(ບົດອະທິບາຍເລກທີ 5)* ແມ່ນຖືກຮັບຮູ້ໃຫ້ເປັນລາຍຈ່າຍຂອງບໍລິສັດ.

5. ລາຍຈ່າຍການດຳເນີນງານ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ລາຍຈ່າຍຈາກສັນຍາຮ່ວມມື *(ບົດອະທິບາຍເລກທີ 4)*	8,884,271,110	8,589,356,314
ລາຍຈ່າຍໃຫ້ພະນັກງານ	185,640,000	192,741,000
ອື່ນໆ	984,792,320	659,293,212
	10,054,703,430	**9,441,390,526**

6. ສ່ວຍສາອາກອນ

ໝາຍສ່ວຍສາອາກອນ ເລກທີ.70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016.

ບໍລິສັດໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວ ຕັ້ງແຕ່ວັນທີ 31 ພຶດສະພາ 2019 ໂດຍອີງຕາມແຈ້ງການສະບັບເລກທີ. 2618/ພສ, ລົງວັນທີ 04 ມິຖຸນາ 2018 ຈາກກະຊວງການເງິນ, ບໍລິສັດໄດ້ຮັບອະນຸຍາດຫຼຸດອາກອນກຳໄລ 5% ຈາກອັດຕາປົກກະຕິເປັນຄັ້ງທຳອິດ 5 ປີ ແຕ່ປີ 2018 ເຖິງປີ 2021. ອີງຕາມອາກອນລາຍໄດ້ຂອງບໍລິສັດ ສຳລັບຊ່ວງໄລຍະນີ້ແມ່ນຈະໄດ້ຮັບອັດຕາສ່ວນຫຼຸດຂອງອາກອນລາຍໄດ້ແມ່ນ 19%.

6. ສ່ວຍສາອາກອນ (ຕໍ່)

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ລາຍຈ່າຍອາກອນກຳໄລປະຈຸບັນ	29,553,410	1,175,044,809
ລາຍຈ່າຍອາກອນເຍື້ອນຊຳລະ	1,283,918,954	604,440,000
	1,313,472,364	**1,779,484,809**

ອາກອນກຳໄລ ("ອກລ")

ການເກັບຄືນອາກອນຂອງບໍລິສັດຂຶ້ນກັບການກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ເນື່ອງຈາກກົດລະບຽບ ແລະ ກົດໝາຍ ສ່ວຍສາອາກອນ ແມ່ນມີຄວາມອ່ອນໄຫວຕໍ່ການຕີຄວາມໝາຍທີ່ແຕກຕ່າງກັນ, ຕົວເລກທີ່ໄດ້ລາຍງານໃນເອກະສານລາຍ ງານການເງິນສາມາດປ່ຽນແປງໄດ້ອີກ ຂຶ້ນກັບການພິຈາລະນາຂັ້ນສຸດທ້າຍໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ກຳໄລກ່ອນອາກອນ	6,913,012,445	7,414,520,039
ອັດຕາອາກອນກຳໄລ	19%	24%
ລາຍຈ່າຍອາກອນກຳໄລ	**1,313,472,364**	**1,779,484,809**
ດັດແກ້ໂດຍການເພີ້ມຂຶ້ນ/(ຫຼຸດລົງ) ອາກອນກຳໄລ		
ຄ່າຫຼຸຍຫ້ຽນຂອງການລົງທຶນໃນຊັບສິນອາກອນພາຍໃຕ້ ກົດໝາຍສ່ວຍສາອາກອນ	(754,844,954)	-
ລາຍໄດ້ທີ່ບໍ່ໄດ້ເສຍອາກອນກ່ຽວກັບກຳໄລຈາກການຕີ ມູນຄ່າຊັບສິນເພື່ອການລົງທຶນ	(529,074,000)	(604,440,000)
ລາຍຈ່າຍອາກອນກຳໄລປະຈຸບັນ	**29,553,411**	**1,175,044,809**

6. ສ່ວຍສາອາກອນ (ຕໍ່)

ອາກອນເຍື້ອນຊຳລະ

ລາຍການຕໍ່ໄປນີ້ແມ່ນໜີ້ສິນອາກອນເຍື້ອນຊຳລະທີ່ຮັບຮູ້ໂດຍບໍລິສັດ, ແລະ ລາຍການເຄື່ອນໄຫວແມ່ນລະຫວ່າງໄລຍະປະຈຸບັນ ແລະ ໄລຍະກ່ອນ.

ສະກຸນເງິນ: ກີບ

	ໃນລາຍງານຖານະການເງິນ		*ໃນລາຍງານຜົນການດຳເນີນງານ*	
	30 ມິຖຸນາ 2019	*31 ທັນວາ 2018*	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019*	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018*
ໜີ້ສິນອາກອນເຍື້ອນຊຳລະ				
ຄວາມແຕກຕ່າງລະຫວ່າງ ຖານອາກອນ ແລະ ຖານການບັນຊີທີ່ກ່ຽວຂ້ອງກັບຊັບສິນເພື່ອການລົງທຶນ	(4,436,347,991)	(3,152,429,037)	(1,283,918,954)	(604,440,000)
ໜີ້ສິນອາກອນເຍື້ອນຊຳລະສຸດທິ	***(4,436,347,991)***	***(3,152,429,037)***		
ລາຍໄດ້ອາກອນເຍື້ອນຊຳລະສຸດທິ/(ຄ່າໃຊ້ຈ່າຍ)ໃນໃບລາຍງານຖານະການເງິນ			***(1,283,918,954)***	***(604,440,000)***

7. ເງິນສົດ

	30 ມິຖຸນາ 2019	*31 ທັນວາ 2018*
	ກີບ	*ກີບ*
ເງິນສົດໃນຄັງ	1,190,301,064	70,958,598
ເງິນສົດໃນທະນາຄານ	37,975,557,193	4,073,312,484
	39,165,858,257	**4,144,271,082**

8. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	30 ມິຖຸນາ 2019 ກີບ	*31 ທັນວາ 2018* ກີບ
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍ ເລກທີ 14)*	9,042,270,305	8,796,019,145
ລາຍຮັບຕ້ອງຮັບຈາກຜູ້ເຊົ່າ	723,969,930	-
	9,766,240,235	**8,796,019,145**

ລາຍຮັບຈາກຄ່າເຊົ່າ ແລະ ການດຳເນີນການອື່ນໆເຊັ່ນ: ລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາຈາກຜູ້ເຊົ່າຈຳນວນໜຶ່ງໃນ ຊ່ວງລະຫວ່າງວັນທີ 30 ພະຈິກ 2017 ຮອດ ວັນທີ 30 ມິຖຸນາ 2019 ແມ່ນໄດ້ຮັບເງິນແລ້ວ ແລະ ເກັບໄວ້ໂດຍ NNCD (ອີງຕາມບົດອະທິບາຍຊ້ອນທ້າຍ ເລກທີ 16)

9. ຈ່າຍລ່ວງໜ້າສຳລັບການຊື້ຊັບສິນ

	30 ມິຖຸນາ 2019 ກີບ	*31 ທັນວາ 2018* ກີບ
ຈ່າຍລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ(ບົດອະທິບາຍ ເລກທີ 14)	23,400,000,000	-
	23,400,000,000	**-**

ອີງຕາມສັນຍາສະບັບເລກທີ. VCLP-F000001 ລົງວັນທີ 13 ມິຖຸນາ 2019, ບໍລິສັດ ແລະ ບໍລິສັດ ພັດທະນາສູນ ເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ຕົກລົງວ່າ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງ ຈອນໜອງຈັນຕອນເໜືອ ຈຳກັດ ຈະໂອນ ເນື້ອທີ່ 1708,29 ຕາແມັດໃນຊັ້ນ 2, 4, 5 ແລະ 8 ເຕີ່ມໃຫ້ບໍລິສັດ ຂອງອາຄານ ຫ້ອງການຂອງຊັ້ບສິນເຈ ເພື່ອການລົງທຶນຕາມທີ່ນຳສະເໜີໃນບົດອະທິບາຍຊ້ອນທ້າຍ ເລກທີ 10. ເຊິ່ງມູນຄ່າສັນຍາແມ່ນ 29,250,000,000 ກີບ ແລະ ຄາດໝາຍວ່າຈະສຳເລັດໃນເດືອນສິງຫາ 2019.

ນະວັນທີ 30 ມິຖຸນາ 2019, ບໍລິສັດໄດ້ຊຳລະແລ້ວ 23,400,000,000 ກີບໃຫ້ແກ່ NNCD ດັ່ງທີ່ໄດ້ກ່າວໄວ້ໃນສັນຍາ ການຊຳລະສະສາງລ່ວງໜ້າ.

10. ຊັບສິນເພື່ອການລົງທຶນ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2019 ກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2018 ກີບ*
ຍອດຍົກມາ	**164,674,800,000**	**160,231,700,000**
ຍອດເຫຼືອທີ່ເພີ່ມຂຶ້ນພາຍໃນໄລຍະ	-	-
ດັດແກ້ມູນຄ່າຍຸດຕິທຳ	2,784,600,000	2,518,500,000
ຍອດເຫຼືອທ້າຍ	**167,459,400,000**	**162,750,200,000**

ໃນວັນທີ 30 ພະຈິກ 2017, ບໍລິສັດແມ່- ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ("NNCD") ໄດ້ໂອນຊັບສິນໃນການເຊົ່າ ("ຊັບສິນພື່ອການລົງທຶນ") ໃຫ້ແກ່ບໍລິສັດ ເຊິ່ງປະກອບດ້ວຍຮ້ານຄ້າຍ່ອຍ ແລະ ຫ້ອງການ ໂດຍລວມເປັນເນື້ອທີ່ມທັງໝົດ 9,607.88 ຕາແມັດ. ຕາມລາຍລະອຽດດັ່ງລຸ່ມນີ້:

- ພາກ A: ຮ້ານຄ້າຍ່ອຍ ແລະ ຫ້ອງການ ໃນຊັ້ນທີ 1, 2, 4 ແລະ 6 ຂອງວຽງຈັນເຊັ້ນເຕີ (ຕຶກພລາຊາ) ໂດຍມີເນື້ອທີ່ 5,753.66 ຕາແມັດ (ຫ້ອໜ່ວຍ ເລກທີ. A1003, A2003, A1012, A1017-2, A1018, A1021, A1020, A1023, A1038, A2049, A4003-1, A4009, B4001, C1016, F6020 ແລະ F6027);

- ພາກ B: ຫ້ອງການ ແລະ ບ່ອນໂຄສະນາສິນຄ້າ ໃນຊັ້ນທີ 1, 6, 7 ແລະ 9 ຂອງວຽງຈັນເຊັ້ນເຕີ (ຕຶກຫ້ອງການ) ໂດຍມີເນື້ອທີ່ 3,854.22 ຕາແມັດ (ຫ້ອໜ່ວຍ ເລກທີ. A1007-1, F6001 ຫາ 8, F6009-1, F6009-2, F6010 ຫາ F6015, F6016-1, F6016-2, F6017, F6018, F6019, F6021 ຫາ F6026, F6028 ຫາ F6031, F6032-1, F6032-2, F6033 ຫາ F6049, F7004 ຫາ F7010, F9001 ຫາ F9012 ແລະ A1000).

ຊັບສິນເພື່ອການລົງທຶນນີ້ ແມ່ນຕັ້ງຢູ່ ຖະໜົນ ຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ໄລຍະເວລາການໃຫ້ເຊົ່າທັງໝົດແມ່ນ 50 ປີ ແລະ ສາມາດຕໍ່ສັນຍາສຳປະທານໄດ້ຕື່ມອີກ 20 ປີ, ແຕ່ ວັນທີ 29 ກັນຍາ 2010 ອີງຕາມໃບຢັ້ງຢືນການສຳປະທານທີ່ດິນ ລົງວັນທີ 29 ເມສາ 2014 ແລະ ໃບສັນຍາສຳປະທານຕື່ມ ລົງວັນທີ 29 ເມສາ 2014 ແລະ ໃບທະບຽນລົງວັນທີ 8 ພຶດສະພາ 2014 ເຊິ່ງອອກໂດຍ ເຈົ້າໜ້າທີ່ນະຄອນຫຼວງວຽງຈັນ ມອບໃຫ້ແກ່ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ຮັບໃບຕາດິນ ເມື່ອວັນທີ 4 ເມສາ 2014 ຈາກກົມສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ນະຄອນຫຼວງວຽງຈັນ.

ໃນເບື້ອງຕົ້ນ ບໍລິສັດ ໄດ້ຮັບຮູ້ຊັບສິນຕາມຕົ້ນທຶນ, ຕາມລາຄາທີ່ຕົກລົງກັນ ລະຫວ່າງ ບໍລິສັດ ແລະ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ລາຄາດັ່ງກ່າວໄດ້ຖືກກຳນົດໂດຍອີງໃສ່ບົດລາຍງານການປະເມີນມູນຄ່າ ໃນວັນທີ 26 ມິນາ 2018 ໂດຍ ບໍລິສັດ Sims Property Consultants Company Limited, ທີ່ປຶກສາພາຍນອກຈາກປະເທດໄທ, ເຊິ່ງມູນຄ່າຊັບສິນເພື່ອການລົງທຶນທັງຫມົດແມ່ນ:

- ພາກ A: 95,999,200,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ
- ພາກ B: 64,232,500,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ.

10. ຊັບສິນເພື່ອການລົງທຶນ (ຕໍ່)

ນະວັນທີ 30 ມິຖຸນາ 2019, ຊັບສິນເພື່ອການລົງທຶນຖືກຮັບຮູ້ດ້ວຍມູນຄ່າຍຸດຕິທຳ. ອີງຕາມບົດລາຍງານການປະເມີນມູນຄ່າພາຍໃນ, ບໍລິສັດໄດ້ປະເມີນວ່າ ມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນທີ່ໄດ້ເພີ່ມຂຶ້ນ 2,784,600,000 ກີບ ປຽບທຽບກັບມູນຄ່າຍຸດຕິທຳ ນະວັນທີ 31 ທັນວາ 2018.

ມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນແມ່ນກຳນົດໂດຍການໃຊ້ວິທີສ່ວນຫຼຸດກະແສເງິນສົດ (DCF). ພາຍໃຕ້ວິທີການ DCF, ມູນຄ່າຍຸດຕິທຳໄດ້ຖືກຄາດຄະເນໂດຍການຕັ້ງສົມມຸດຖານ ກ່ຽວກັບ ຜົນປະໂຫຍດ ແລະ ໜີ້ສິນຂອງຜູ້ເຈົ້າຂອງ ຕະຫຼອດອາຍຸຂອງການໃຊ້ງານຂອງຊັບສິນ ລວມທັງມູນຄ່າທີ່ມີຢູ່ ຫຼື ມູນຄ່າຢຸດເຊົານຳໃຊ້. ວິທີການນີ້ປະກອບດ້ວຍການຄາດຄະເນຂອງກະແສເງິນສົດຕາມຜົນປະໂຫຍດທີ່ແທ້ຈິງຂອງຊັບສິນ. ສຳລັບກະແສເງິນສົດທີ່ຄາດຄະເນຕາມຄວາມເໝາະສົມ, ອັດຕາສ່ວນຫຼຸດຈາກຕະຫຼາດ ແມ່ນຖືກນຳໃຊ້ເພື່ອສ້າງມູນຄ່າປະຈຸບັນຂອງກະແສລາຍຮັບທີ່ກ່ຽວຂ້ອງກັບຊັບສິນ. ຕາມ ປົກກະຕິ ຜົນໄດ້ຮັບທີ່ອອກມາຈະຖືກກຳນົດໄວ້ຕ່າງຫາກ ແລະ ແຕກຕ່າງຈາກອັດຕາສ່ວນຫຼຸດ.

ໄລຍະເວລາຂອງກະແສເງິນສົດ ແລະ ໄລຍະເວລາສະເພາະຂອງການໄຫຼເຂົ້າ ແລະ ໄຫຼອອກ ແມ່ນໄດ້ຖືກກຳນົດໂດຍ ເຫດການເຊັ່ນວ່າ ການທົບທວນຄ່າເຊົ່າ, ການຕໍ່ອາຍຸການເຊົ່າ ແລະ ການໃຫ້ເຊົ່າໃໝ່, ການປັບປຸງໃໝ່, ຫຼື ການຕົບແຕ່ງໃໝ່ ທີ່ກ່ຽວຂ້ອງ. ໄລຍະເວລາທີ່ເໝາະສົມແມ່ນເຄື່ອນໄຫວຕາມປົກກະຕິຂຶ້ນກັບພຶດຕິກຳຂອງຕະຫຼາດ ຕາມລັກສະນະປະເພດ ຂອງຊັບສິນຕົວຈິງ. ກະແສເງິນສົດໃນແຕ່ໄລຍະ ໂດຍທົ່ວໄປແມ່ນໄດ້ຄາດຄະເນຕາມ ລາຍຮັບທັງໝົດ ຫັກສ່ວນຫ້ອງທີ່ວ່າງ, ລາຍຈ່າຍທີ່ບໍ່ສາມາດຮຽກເກັບຄືນໄດ້, ການເກັບຄືນບໍ່ໄດ້, ແຮງຈູງໃຈໃນການເຊົ່າ, ລາຍຈ່າຍໃນການບຳລຸງຮັກສາ, ຄ່າຕົວ ແທນ ແລະ ຄ່ານາຍໜ້າ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານອື່ນໆ. ລາຍຮັບສຸດທິຈາກການດຳເນີນງານ ແຕ່ລະໄລຍະ ຂຶ້ນກັບການຄາດຄະເນຂອງມູນຄ່າທີ່ຈະສິ້ນສຸດທີ່ຄາດໄວ້ ໃນເວລາສິ້ນສຸດໄລຍະເວລາທີ່ກຳນົດໄວ້, ແມ່ນຈະ ຖືກຫຼຸດລົງ.

10. ຊັບສິນເພື່ອການລົງທຶນ (ຕໍ່)

ຕາຕະລາງດັ່ງຕໍ່ໄປນີ້ ສະແດງໃຫ້ເຫັນວິທີການປະເມີນມູນຄ່າທີ່ໃຊ້ໃນການວັດແທກມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ ລວມເຖິງ ຕົວປ້ອນສຳຄັນທີ່ຖືກນຳໃຊ້ໂດຍບໍ່ສາມາດສັງເກດເຫັນໄດ້:

ວິທີການປະເມີນ	*ຕົວປ້ອນສຳຄັນທີ່ບໍ່ສາມາດສັງເກດເຫັນໄດ້*	*ຄວາມສຳພັນລະຫວ່າງຕົວປ້ອນທີ່ສຳຄັນທີ່ບໍ່ສາມາດສັງເກດເຫັນໄດ້ ແລະ ການວັດແທກມູນຄ່າຍຸດຕິທຳ*
ສ່ວນຫຼຸດຂອງກະແສເງິນສົດ: ວິທີການປະເມີນມູນຄ່າພິຈາລະນາຈາກມູນຄ່າປະຈຸບັນຂອງການໝຸນວຽນຂອງເງິນສົດສຸດທິທີ່ຈະໄດ້ມາຊັບສິນ, ພິຈາລະນາອັດຕາການເພີ່ມຂຶ້ນຂອງລາຄາເຊົ່າສຳລັບພື້ນທີ່ວ່າງຮ້ານຄ້າຍ່ອຍ ແລະ ຫ້ອງການ, ອັດຕາການຄອບຄອງ, ໄລຍະເວລາວ່າງ, ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ຄ່າອື່ນໆ. ການໝຸນວຽນຂອງກະແສເງິນສົດສຸດທິທີ່ຄາດໄວ້ຈະຫຼຸດລົງໂດຍນຳໃຊ້ອັດຕາສ່ວນຫຼຸດທີ່ດັດປັບຕາມຄວາມສ່ຽງ. ໃນລະຫວ່າງບັນດາປັດໃຈອື່ນໆ, ການຄາດຄະເນອັດຕາສ່ວນຫຼຸດແມ່ນພິຈາລະນາຄຸນນະພາບຂອງອາຄານ ແລະ ສະຖານທີ່, ຄຸນນະພາບຂອງສິນເຊື່ອທີ່ເຊົ່າ ແລະ ເງື່ອນໄຂການເຊົ່າຕ່າງໆ	▶ ອັດຕາການເພີ່ມຂຶ້ນຂອງລາຄາເຊົ່າສຳລັບຮ້ານຄ້າຍ່ອຍ ແລະ ຫ້ອງການ: - ພື້ນທີ່ຮ້ານຄ້າຍ່ອຍ: 5% ຕໍ່ປີ ແຕ່ 1 ກໍລະກົດ 2019 ເຖິງ 31 ທັນວາ 2027 ແລະ 3% ຕໍ່ປີ ແຕ່ 1 ມັງກອນ 2028 ຂຶ້ນໄປ; - ພື້ນທີ່ເຊົ່າຫຼັກ: 5% ຕໍ່ປີ ແຕ່ 1 ກໍລະກົດ 2019 ເຖິງ 31 ທັນວາ 2020 ແລະ 3% ຕໍ່ປີ ແຕ່ 1 ມັງກອນ 2021 ຂຶ້ນໄປ; - ພື້ນທີ່ຫ້ອງການ: 0% ໃນ 1 ກໍລະກົດ 2019, 10% ສຳລັບທຸກໆສາມປີ ແຕ່ 1 ມັງກອນ 2021 ເຖິງ 31 ທັນວາ 2027 ແລະ 3% ຕໍ່ປີ ແຕ່ 1 ມັງກອນ 2028 ຂຶ້ນໄປ. ▶ ອັດຕາການຄອບຄອງ - ພື້ນທີ່ຮ້ານຄ້າຍ່ອຍ: 100% ແຕ່ 1 ກໍລະກົດ2019 ເຖິງ 31 ທັນວາ 2020, 98% ແຕ່ 1 ມັງກອນ 2021 ເຖິງ 31 ທັນວາ 2027 ແລະ 96% ແຕ່ 1 ມັງກອນ 2028 ຂຶ້ນໄປ; - ພື້ນທີ່ເຊົ່າຫຼັກ: 100% ແຕ່ 2018 ເຖິງ 2020, 98% ແຕ່ 2021 ເຖິງ 2027 ແລະ 90% ແຕ່ 2028 ຂຶ້ນໄປ; - ພື້ນທີ່ຫ້ອງການ: 100% ແຕ່ 1 ກໍລະກົດ 2019 ເຖິງ 31 ທັນວາ 2020, 95% ແຕ່ 1 ມັງກອນ 2021 ເຖິງ 31 ທັນວາ 2027, ແລະ 80% ແຕ່ 1 ມັງກອນ 2028 ຂຶ້ນໄປ. ▶ ອັດຕາສ່ວນຫຼຸດຈາກການດັດປັບຄວາມສ່ຽງ ແມ່ນຢູ່ທີ່ 13%	ການປະເມີນມູນຄ່າຍຸດຕິທຳຈະເພີ່ມຂຶ້ນ/(ຫຼຸດລົງ) ຖ້າຫາກວ່າ: ▶ ອັດຕາການເພີ່ມຂຶ້ນຂອງລາຄາເຊົ່າສຳລັບຮ້ານຄ້າຍ່ອຍ ແລະ ຫ້ອງການແມ່ນສູງຂຶ້ນ(ຫຼຸດລົງ); ▶ ອັດຕາການຄອບຄອງແມ່ນສູງຂຶ້ນ (ຫຼຸດລົງ); ▶ ອັດຕາສ່ວນຫຼຸດຈາກການດັດປັບຄວາມສ່ຽງແມ່ນສູງຂຶ້ນ(ຫຼຸດລົງ).

10. ຊັບສິນເພື່ອການລົງທຶນ (ຕໍ່)

ການວັດແທກມູນຄ່າຍຸດຕິທຳ - ຊັບສິນເພື່ອການລົງທຶນ

ນະໂຍບາຍ ແລະ ຂັ້ນຕອນການປະເມີນມູນຄ່າຂອງບໍລິສັດສຳລັບການຕີມູນຄ່າຊັບສິນ ແມ່ນໄດ້ຖືກສະເຫນີໂດຍທີມຜູ້ບໍລິຫານ ໃນຂະນະທີ່ ຄະນະກຳມະການກວດສອບເປັນຜູ້ກຳນົດ.ເມື່ອມີເຫດການຈຳເປັນ, ທີມຜູ້ບໍລິຫານຈະແນະນຳ ແລະ ຄະນະກຳມະການກວດສອບກແຕ່ງຕັ້ງຜູ້ປະເມີນພາຍນອກເຊິ່ງມີໜ້າທີ່ຮັບຜິດຊອບໃນການປະເມີນມູນຄ່າຊັບສິນພາຍນອກ ຂອງບໍລິສັດ ເພື່ອຈຸດປະສົງໃນການກຳນົດມູນຄ່າຍຸດຕິທຳໃນເອກະສານລາຍງານການເງິນປະຈຳປີ. ເງື່ອນໄຂໃນການຄັດເລືອກລວມມີຄວາມຮູ້ກ່ຽວກັບຕະຫຼາດ, ຊື່ສຽງ, ຄວາມເປັນເອກະລາດ ແລະ ບໍ່ວ່າຈະເປັນມາດຕະຖານດ້ານວິຊາຊີບ. ຜູ້ປະເມີນຜົນແມ່ນຈະມີການປ່ຽນທຸກໆສາມປີ.

ລະດັບຂັ້ນມູນຄ່າຍຸດຕິທຳ

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນການວິເຄາະມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ ໄດ້ຖືກຮັບຮູ້ໃນໃບລາຍງານຜົນການ ດຳເນີນງານໂດຍລະດັບຂັ້ນຂອງມູນຄ່າຍຸດຕິທຳ.

	ມູນຄ່າຍຸດຕິທຳ				
	ລາຄາອ້າງອີງໃນຕະຫຼາດທີ່ມີຢູ່ (ລະດັບ 1)	*ຕີລຶ້ອນສຳຄັນທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 2)*	*ຕີລຶ້ອນສຳຄັນຕ່າງໆທີ່ບໍ່ສາມາດສັງເກດເຫັນໄດ້ (ລະດັບ 3)*	*ລວມທັງໝົດ*	*ກຳໄລທັງໝົດພາຍໃນໄລຍະໃນໃບລາຍງານຜົນການດຳເນີນງານ*
ວັນທີ 30 ມິຖຸນາ 2019					
ຊັບສິນເພື່ອການລົງທຶນ	-	-	167,459,400,000	167,459,400,000	2,784,600,000
	-	**-**	**167,459,400,000**	**167,459,400,000**	**2,784,600,000**
ວັນທີ 31 ມິຖຸນາ 2018					
ຊັບສິນເພື່ອການລົງທຶນ	-	-	162,750,200,000	162,750,200,000	2,518,500,000
	-	**-**	**162,750,200,000**	**162,750,200,000**	**2,518,500,000**

11. ການກູ້ຢືມໄລຍະສັ້ນ ແລະ ໄລຍະຍາວ

	30 ມິຖຸນາ 2019 *ກີບ*	*31 ທັນວາ 2018* *ກີບ*
ການກູ້ຢືມໄລຍະສັ້ນຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍທີ 14)*	64,232,500,000	-
ການກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍທີ 14)*	-	64,232,500,000
	64,232,500,000	**64,232,500,000**

ອີງຕາມບົດບັນທຶກການໂອນຊັບສິນ ໃນວັນທີ 30 ພະຈິກ 2017 ແລະ ຂໍ້ຕົກລົງການກູ້ຢືມ ໃນວັນທີ 30 ພະຈິກ 2017, ບໍລິສັດໄດ້ຮັບຮູ້ການກູ້ຢືມໄລຍະສັ້ນ ຈາກບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໂດຍມີຕົ້ນທຶນເປັນສ່ວນຕ່າງລະຫວ່າງຕົ້ນທຶນຂອງຊັບສິນເພື່ອການລົງທຶນໃນເວລາໂອນເປັນຈຳນວນ 160,231,700,000 ກີບ (*ບົດອະທິບາຍ ເລກທີ 10*) ແລະ ທຶນຈົດທະບຽນທີ່ໄດ້ປະກອບໂດຍ ບໍລິສັດພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ເປັນຈຳນວນ 95,999,200,000 ກີບ.

ນະວັນທີ 31 ທັນວາ 2017, ຕົ້ນທຶນ, ອັດຕາດອກເບ້ຍ ແລະ ເງື່ອນໄຂການຈ່າຍຄືນໃນການກູ້ຢືມແມ່ນຢູ່ພາຍໃຕ້ການເຈລະຈາຕໍ່ລອງລະຫວ່າງສອງຝ່າຍ. ບໍລິສັດນຳເອົາ 68 ຫົວໜ່ວຍໃນ ພາກ B ເປັນຫຼັກຊັບຄ້ຳປະກັນ.

ອີງຕາມການປັບປຸງຂໍ້ຕົກລົງການກູ້ຢືມໃນວັນທີ 13 ມິຖຸນາ 2018, ມີເງື່ອນໄຂສຳລັບ 2 ປີ ແລະ ກຳນົດອັດຕາດອກເບ້ຍ 3.5% ຕໍ່ປີ. ຕົ້ນທຶນ ແລະ ດອກເບ້ຍຈະຊຳລະໃນມື້ທີ່ຄົບກຳນົດ.

ທັງສອງຝ່າຍເຫັນດີວ່າມີພຽງຜູ້ໃຫ້ຢືມມີສິດໃຫ້ເລືອກວິທີການຈ່າຍ. ເງື່ອນໄຂ ແລະ ວິທີການຈ່າຍແມ່ນເປັນໄປຕາມຂໍ້ກຳນົດຂອງສັນຍາ:

- ໃນກໍລະນີວ່າຜູ້ໃຫ້ຢືມເລືອກຈ່າຍຜ່ານເງິນສົດ, ຈຳນວນຂອງການຈ່າຍແມ່ນເທົ່າກັບຈຳນວນຂອງເງິນກູ້ ແລະ ດອກເບ້ຍຕາມຂໍ້ກຳນົດໃນຂໍ້ 2.2 ຂອງຂໍ້ຕົກລົງ (ຈາກວັນທີ່ຂອງສັນຍາມີຜົນບັງຄັບໃຊ້ຈົນເຖິງມື້ຄົບກຳນົດ)
- ໃນກໍລະນີວ່າຜູ້ໃຫ້ຢືມເລືອກດ້ວຍວິທີການອອກຮຸ້ນໃໝ່ໂດຍບໍລິສັດ, ຈຳນວນຮຸ້ນທີ່ຕ້ອງໄດ້ຊຳລະໃນແກ່ຜູ້ກູ້ຈະຄຳນວນຈາກສ່ວນຕ່ຳລະຫວ່າງ (A) ມູນຄ່າໜ້າບັດຂອງຮຸ້ນຂອງຜູ້ຢືມ, (B) ຊັບສິນສຸດທິຕໍ່ຮຸ້ນຂອງຜູ້ຢືມ, (C) 90% ຂອງລາຄາຮຸ້ນສະເລ່ຍທີ່ຊື້ຂາຍໃນຕະຫຼາດຫຼັກຊັບລາວພາຍໃນ 30 ວັນກ່ອນຈ່າຍເງິນປັນຜົນ. ນອກຈາກນີ້, ຫາກຜູ້ໃຫ້ຢືມເລືອກທີ່ຈະຮັບຮຸ້ນໃໝ່ທີ່ອອກໂດຍບໍລິສັດ, ຜູ້ໃຫ້ກູ້ຍືນດີທີ່ຈະຜ່ອນດອກເບ້ຍ.

ວັນທີ 30 ມິຖຸນາ 2018, NNCD ອອກໜັງສືສະບັບເລກທີ. 44/NNCD ເພື່ອຫຼຸດລົງ 250,000,000 ກີບຈາກຄ່າໃຊ້ຈ່າຍດອກເບ້ຍທີ່ເກີດຂຶ້ນສຳລັບ 6 ເດືອນຕັ້ງແຕ່ວັນທີ 1 ມັງກອນ 2018 ຫາ ວັນທີ 30 ມິຖຸນາ 2018.

ວັນທີ 7 ມີນາ 2019, ບໍລິສັດໄດ້ຮັບຈົດໝາຍຈາກເພື່ອອະນຸຍາດໃຫ້ຕໍ່ສັນຍາເງິນກູ້ຄືນໃໝ່ຮອດ ວັນທີ 30 ພະຈິກ 2019

12. ໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງສົ່ງອື່ນໆ

	30 ມິຖຸນາ 2019	*31 ທັນວາ 2018*
	ກີບ	*ກີບ*
ໜີ້ຕ້ອງສົ່ງອາກອນກຳໄລ (*)	1,068,173,984	328,254,397
ລາຍຮັບຈາກຜູ້ເຊົ່າ	1,271,368,994	-
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ(**)	3,032,793,106	2,068,295,491
ອື່ນໆ	360,519,480	431,447,095
	5,732,855,566	**2,827,996,983**

(*), (**) ອີງຕາມບົດບັນທຶກໄລ່ລຽງອາກອນສະບັບເລກທີ. 0628 /ພສ.ນວ ລົງວັນທີ 26 ກໍລະກົດ 2019 ແລະ ເລກທີ 0628/ພສ.ນວ ລົງວັນທີ 26 ກໍລະກົດ 2019 ສຳລັບປີ ສິ້ນສຸດນະວັນທີ 31 ທັນວາ 2017 ແລະ ວັນທີ 31 ທັນວາ 2018 ບໍລິສັດຕ້ອງໄດ້ຮັບຮູ້ການເພີ່ມຂຶ້ນຂອງອາກອນມູນຄ່າເພີ່ມຈຳນວນ 581,358,175 ກີບ ແລະ ພັນທະອາກອນກຳໄລເພີ່ມຂຶ້ນ - ອາກອນກຳໄລສຳລັບເຫຼົ່າປີນີ້ ຈຳນວນ 790,446,177 ກີບ. ຈາກນັ້ນບໍລິສັດໄດ້ບັນທຶກພັນທະເຫຼົ່ານີ້ເປັນການດັດແກ້ກຳໄລສະສົມ.

13. ທຶນຈົດທະບຽນທີ່ຖອກແລ້ວ

ຮຸ້ນທີ່ໄດ້ຮັບການອະນຸຍາດ

	30 ມິຖຸນາ 2019		*31 ທັນວາ 2018*	
	ຈຳນວນຮຸ້ນ	*ກີບ*	*ຈຳນວນຮຸ້ນ*	*ກີບ*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ການອອກຮຸ້ນ ແລະ ຈຳໜ່າຍ ຮຸ້ນ				
ຮຸ້ນສາມັນ	147,199,900	147,199,900,000	96,000,000	96,000,000,000

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ. 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ. 0833/ກຄກ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ.

ຫຼັງຈາກການສະເໜີຂາຍຮຸ້ນຄັ້ງທຳອິດຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫລັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019

14. ທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງ

ບັນດາທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາ. ບັນດາທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ລັກສະນະຂອງທຸລະກຳ*	*ສຳລັບໄລຍະ 6 ເດືອນ ສິ້ນສຸດໃນວັນທີ 30 ມິຖຸນາ 2019*	*ສຳລັບ 6 ເດືອນ ສິ້ນສຸດໃນວັນທີ 30 ມິຖຸນາ 2018*
			ກີບ	*ກີບ*
ບໍລິສັດ ພັດທະນາສູນ ເສດຖະກິດການຄ້າ ຄົບວົງຈອນໝອງຈັນ ຕອນ ເໜືອ ຈຳກັດ	ບໍລິສັດແມ່	ການເກັບຄ່າເຊົ່າໃນນາມ ຂອງບໍລິສັດ	2,459,369,343	5,405,562,066
		ຄ່າໃຊ້ຈ່າຍດອກເບ້ຍ	(1,124,069,112)	1,067,658,368
		ການຊຳລະໃນນາມບໍລິສັດ	(583,593,340)	491,819,935
		ການເກັບຄ່າບຳລຸງຮັກສາ ໃນນາມຂອງ NNCD	(148,721,491)	(214,996,939)
		ລ່ວງໜ້າສຳລັບການສັ່ງຊື້ ຊັບສິນ	23,400,000,000	-

ຂໍ້ກຳນົດ ແລະ ເງື່ອນໄຂ

ຄ່າບໍລິຫານແມ່ນຄິດໄລ່ຄ່າໃຊ້ຈ່າຍຕົວຈິງ (ຕົວຢ່າງ: ການທຳຄວາມສະອາດ, ຄ່າໄຟຟ້າ, ແລະ ອື່ນໆ) ຈ່າຍໃນນາມຂອງບໍລິສັດ ທີ່ເຮັດໂດຍ NNCD .

ຍອດເຫຼືອທີ່ຍັງຄ້າງຢູ່ແມ່ນບໍ່ມີຫຼັກຊັບຄ້ຳປະກັນ ແລະ ຈະຖືກຊຳລະເປັນເງິນສົດ. ສຳລັບໄລຍະ 6 ເດືອນສິ້ນສຸດ ວັນທີ 30 ມິຖຸນາ 2019, ບໍລິສັດບໍ່ໄດ້ຫັກເງິນແຮສຳລັບໜີ້ເສຍທີ່ກ່ຽວຂ້ອງກັບຈຳນວນເງິນ ຂອງພາກສ່ວນທີ່ກ່ຽວຂ້ອງ (31 ທັນວາ 2018: ສູນ).

14. ທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຂໍ້ກຳນົດ ແລະ ເງື່ອນໄຂ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2018 ແລະ 30 ມິຖຸນາ 2019 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ລັກສະນະຂອງທຸລະກຳ*	*30 ມິຖຸນາ 2019*	*31 ທັນວາ 2018*
			ກີບ	*ກີບ*
ໜີ້ຕ້ອງຮັບອື່ນໆ (*ບົດອະທິບາຍເລກທີ 8*)				
ບໍລິສັດ ພັດທະນາສຸນ ເສດຖະກິດການຄ້າ ຄົບວົງຈອນໝອງຈັນ ຕອນ ເໜືອ ຈຳກັດ	ຜູ້ຖືຮຸ້ນ	ໜີ້ຕ້ອງຮັບສຸດທິ	9,042,270,305	8,796,019,145
			9,042,270,305	**8,796,019,145**
ຈ່າຍລ່ວງໜ້າສຳລັບການສັ່ງຊື້ຊັບສິນ (*ບົດອະທິບາຍເລກທີ 9*)				
ບໍລິສັດ ພັດທະນາສຸນ ເສດຖະກິດການຄ້າ ຄົບວົງຈອນໝອງຈັນ ຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ຈ່າຍລ່ວງໜ້າ	23,400,000,000	-
			23,400,000,000	-
ການກູ້ຢືມໄລຍະສັ້ນ ແລະ ໄລຍະຍາວ (*ບົດອະທິບາຍເລກທີ 11*)				
ບໍລິສັດ ພັດທະນາສຸນ ເສດຖະກິດການຄ້າ ຄົບວົງຈອນໝອງຈັນ ຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ການກູ້ຢືມ (*)	64,232,500,000	64,232,500,000
			64,232,500,000	**64,232,500,000**

(*) ເງິນກູ້ມີເງື່ອນໄຂສຳລັບ 2 ປີ ແລະ ອັດຕາດອກເບ້ຍແມ່ນ 3.5% ຕໍ່ປີ. ຕົ້ນທຶນ ແລະ ອັດຕາດອກເບ້ຍຈະຈ່າຍຄືນໃນວັນຄົບກຳນົດ. ອີງຕາມບົດອະທິບາຍຊ້ອນທ້າຍເລກທີ 10 ສຳລັບຂໍ້ມູນເພີ່ມເຕີມ.

ຍອດເຫຼືອທີ່ຍັງຄ້າງທັງໝົດກັບພາກສ່ວນທີ່ກ່ຽວຂ້ອງແມ່ນບໍ່ມີຫຼັກຊັບຄ้ำປะกัน ແລະ ບໍ່ມີດອກເບ້ຍ.

15. ການບໍລິຫານທຶນ

ທຶນຂອງບໍລິສັດປະກອບດ້ວຍທຶນ, ເງິນກູ້, ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ.

ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອຮັບປະກັນວ່າ ບໍລິສັດຮັກສາອັດຕາສ່ວນທຶນ ຢູ່ໃນສະພາບທີ່ດີ ເພື່ອສະໜັບສະໜຸນທຸລະກິດຂອງຕົນ ແລະ ເພີ່ມມູນຄ່າຂອງຜູ້ຖືຮຸ້ນ.

ບໍລິສັດບໍລິຫານໂຄງສ້າງທຶນຂອງຕົນ ແລະ ປັບປຸງແກ້ໄຂຕໍ່ໂຄງສ້າງດັ່ງກ່າວ ໃນດ້ານຂອງການປ່ຽນແປງເງື່ອນໄຂເສດຖະກິດ. ເພື່ອຮັກສາ ຫຼື ປັບໂຄງສ້າງທຶນ, ບໍລິສັດອາດຈະປັບປຸງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ຄືນທຶນກັບຜູ້ຖືຮຸ້ນ ຫຼື ເພີ່ມຮຸ້ນທຶນ.

ບໍລິສັດໄດ້ຕິດຕາມທຶນ ໂດຍໃຊ້ອັດຕາສ່ວນໜີ້ສິນຕໍ່ທຶນ ເຊິ່ງເທົ່າກັບໜີ້ສິນສຸດທິຫານໃຫ້ທຶນທັງໝົດ ບວກກັບ ຫນີ້ສິນສຸດທິ.

	30 ມິຖຸນາ 2019 *ກີບ*	*31 ທັນວາ 2018* *ກີບ*
ໜີ້ສິນທັງໝົດ	74,401,703,557	70,212,926,020
ຫັກ: ເງິນສິດ ແລະ ທຽບເທົ່າເງິນສິດ	(39,165,858,257)	(4,144,271,082)
ໜີ້ສິນສຸດທິ	**35,235,845,300**	**66,068,654,938**
ທຶນ	165,389,794,935	107,402,164,207
ທຶນ ແລະ ໜີ້ສິນສຸດທິ	**200,625,640,235**	**173,470,819,145**
ອັດຕາສ່ວນໜີ້ສິນຕໍ່ທຶນ	18%	38%

ຄວາມພຽງພໍຂອງອັດຕາສ່ວນໜີ້ສິນຕໍ່ທຶນແມ່ນໄດ້ທົບທວນຄືນ ແລະ ກຳນົດໂດຍຄະນະບໍລິຫານໃນແຕ່ລະປີ.

16. ຂໍ້ຜູກພັນສັນຍາ

ບໍລິສັດໄດ້ອະນຸຍາດໃຫ້ພື້ນທີ່ ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ການຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບ ຈາກຄ່າເຊົ່າໃນອະນາຄົດ ນະວັນທີ 30 ມິຖຸນາ 2019 ແລະ 31 ທັນວາ 2018 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	30 ມິຖຸນາ 2019 *ກີບ*	*31 ທັນວາ 2018* *ກີບ*
ໜ້ອຍກວ່າ 1 ປີ	6,217,453,292	5,631,816,790
ແຕ່ 1 - 5 ປີ	19,938,759,920	20,680,986,588
ຫຼາຍກວ່າ 5 ປີ	32,888,260,195	37,750,367,829
ລວມທັງໝົດ	**59,044,473,407**	**64,063,171,207**

16. ຂໍ້ຜູກພັນສັນຍາ (ຕໍ່)

ເງິນມັດຈຳ ແລະ ການຊຳລະຄ່າເຊົ່າລ່ວງໜ້າຂອງຜູ້ເຊົ່າ

ນະວັນທີ 30 ມິຖຸນາ 2019, NNCD ມີເງິນມັດຈຳ ແລະ ຄ່າເຊົ່າລ່ວງໜ້າຈາກຜູ້ເຊົ່າບາງລູກຄ້າຈຳນວນ 1.5 ພັນລ້ານກີບ ແລະ 11.5 ພັນລ້ານກີບ ຕາມລຳດັບ. ນະມື່ລາຍງານນີ້, NNCD ແລະ ບໍລິສັດແມ່ນຢູ່ໃນລະຫວ່າງຂັ້ນຕອນການດຳເນີນການເພື່ອໃຫ້ບັນລຸໃນການໂອນ ແລະ ການຊຳລະເງິນລ່ວງໜ້າດັ່ງກ່າວໃນບັນຊີຂອງບໍລິສັດ.

17. ຂໍ້ມູນກ່ຽວກັບສ່ວນທີ່ກ່ຽວຂ້ອງ

ກິດຈະກຳຫຼັກຂອງບໍລິສັດໃນໃບອະນຸຍາດດຳເນີນທຸລະກິດແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າແລະຫ້ອງການຕ່າງໆ. ນອກຈາກນັ້ນ , ກິດຈະກຳເຫຼົ່ານີ້ແມ່ນເກີດຂຶ້ນພາຍໃນສປປ ລາວເທົ່ານັ້ນ. ດ້ວຍເຫດນັ້ນ, ການບໍລິຫານຂອງບໍລິສັດ ມີທັດສະນະວ່າມີພຽງແຕ່ໜຶ່ງສະຖານທີ່ສຳລັບທຸລະກິດ ແລະ ພຸມສາດເທົ່ານັ້ນ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນທີ່ຈະນຳສະເໜີຂໍ້ມູນສ່ວນທີ່ກ່ຽວຂ້ອງອື່ນໆ.

18. ກຳໄລຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍໄດ້ແລະການແບ່ງປັນຂໍ້ມູນທີ່ ນຳ ໃຊ້ເຂົ້າໃນລາຍໄດ້ຂັ້ນພື້ນຖານແລະລາຍໄດ້ຕໍ່ການຄິດໄລ່ຮຸ້ນ:

	ສຳລັບຫົກເດືອນ ສິ້ນສຸດນະວັນທີ 30 ມິຖຸນາ 2019 ກີບ	*ສຳລັບຫົກເດືອນ ສິ້ນສຸດນະວັນທີ 30 ມິຖຸນາ 2018 ກີບ*
ກຳໄລສຸດທິຈາກຜູ້ຖືຮຸ້ນສາມັນ	5,599,540,080	5,635,035,230
ຈຳນວນສະເລ່ຍຂອງຮຸ້ນສາມັນ (*)	105,051,916	96,000,000
ກຳໄລຕໍ່ຮຸ້ນ	**53.30**	**58.70**

ຈຳນວນຮຸ້ນສາມັນສະເລ່ຍຕາມຂໍ້ມູນດັ່ງລຸ່ມນີ້:

- ຈຳນວນຮຸ້ນແຕ່ວັນທີ 1 ມັງກອນ 2019 ຫາ ວັນທີ 29 ພຶດສະພາ 2019 ຈຳນວນ 96,000,000 ຮຸ້ນ.
- ຈຳນວນຮຸ້ນແຕ່ວັນທີ 29 ພຶດສະພາ 2019 ຫາ ວັນທີ 30 ມິຖຸນາ 2019 ຈຳນວນ 146,199,900 ຮຸ້ນ

19. ເຫດການຫຼັງຈາກວັນທີລາຍງານ

ບໍ່ມີບັນຫາອື່ນ ຫຼື ເຫດການອື່ນໆທີ່ເກີດຂຶ້ນພາຍຫຼັງວັນທີ 30 ມິຖຸນາ 2019 ທີ່ຮຽກຮ້ອງໃຫ້ມີການປັບປຸງ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງບໍລິສັດ.

ກະກຽມໂດຍ:

ທ່ານ ຊິນເຟີ ຫຼ້ຳ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ້ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

15 ສິງຫາ 2019